# ຫົວຂໍ້ທີ່ດີເດັ່ນ: ການປູກເຂົ້ານາປີ ວິທີການທີ່ພົ້ນເດັ່ນ: ການຄັດເລືອກແນວພັນເຂົ້າ

## ➢ ປະຫວັດຫຍໍ້ຂອງຊາວກະສິກອນ

ຊື່: ທ້າວ ຮັກນ້ອຍ ອາຍຸ: 54 ປີ, ຊົນເຜົ່າ: ໄທດຳ ອາຊີບ: ເຮັດນາ ເກີດຢູ່ບ້ານ: ນາໝໍ້ເໜືອ ເມືອງ: ນາໝໍ້ ແຂວງ: ອຸດົມໄຊ. ທ້າວ ຮັກນ້ອຍ ມີລູກທັງໝົດ 10 ຄົນ, ຍິງ 4 ຄົນ, ອາຊີບຕົ້ນຕໍ ຂອງຄອບຄົວແມ່ນ ເຮັດນາ ແລະ ສວນ. ຄອບຄົວຂອງ ທ້າວຮັກນ້ອຍ ມີເນື້ອທີ່ນາທັງໝົດ 1.3 ເຮັກຕາ ເຊິ່ງເປັນດິນມູນ ສືບທອດມາຈາກພໍ່ແມ່ຂອງລາວ

## ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ການເຮັດນາ ຂອງ ທ້າວຮັກນ້ອຍ ໃນເມື່ອກ່ອນ ແມ່ນເຮັດແບບທຳມະຊາດ  ເຮັດຕາມມີຕາມເກີດ ບໍ່ມີການຄັດເລືອກແນວພັນ ແລະ ໃຊ້ແຕ່ແນວພັນພື້ນເມືອງ ມາຕະຫຼອດ ເຮັດໃຫ້ຜົນຜະລິດຕົກຕ່ຳ. ການຄັດ ເລືອກແນວພັນໃຫ້ແທດເໝາະ ກັບ ພື້ນທີ່ ສາມາດແກ້ໄກບັນຫາ ຜົນຜະລິດ ຕົກຕ່ຳໄດ້.



ທ. ຮັກນ້ອຍ   ບ້ານນາໝໍ້ເໜືອ

## ➢ ການປະຕິບັດວິທີດັ່ງກ່າວ?

- ຄັດເລືອກໃຮ່ນາທີ່ເໝາະສົມໃນການຜະລິດເມັດພັນ
- ສັງເກດເບິ່ງຕົ້ນເຂົ້າທີ່ປູກ ມີການຈະເລີນເຕີບໂຕ ຢ່າງສະໝ່ຳສະເໝີ ບໍ່ໃຫ້ມີເຂົ້າອື່ນມາປົນ
- ສັງເກດເບິ່ງເວລາເຂົ້າອອກຮວງ ຖ້າເຫັນວ່າມີເຂົ້າປົນ ໃຫ້ຕັດຖິ້ມ
- ສັງເກດເບິ່ງຮວງເຂົ້າ ຖ້າເຫັນວ່າ ເຂົ້າສຸກເຫຼືອງສະເໝີກັນແລ້ວ ໃຫ້ເກັບກ່ຽວ ປະຕາກແດດໄວ້ 5 ມື້
- ກອງປະໄວ້ປະມານ 1 ອາທິດ ຫຼັງຈາກນັ້ນ ຈຶ່ງຟາດ
- ເກັບມ້ຽນໄວ້ໃນກະທໍ (ໂປ້ຍ) ເກັບຮັກສາໄວ້ໃນເລົ້າເຂົ້າ ບ່ອນທີ່ມີຄວາມຊຸ່ມໜ້ອຍ





ໃຮ່ນາ ທີ່ໄດ້ຄັດເລືອກ ເຮັດແນວພັນ

## ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ໃນປີ 2004 ທ້າວ ຮັກນ້ອຍ ໄດ້ຮັບການຝຶກອົບຮົມ ວິທີການຄັດເລືອກແນວພັນເຂົ້າ ຈາກໂຄງການ ຄົ້ນຄວ້າເຂດພູດອຍ ແລະ ພັດທະນາ ຄວາມສາມາດ ແລະ ໄດ້ຮັບແນວພັນເຂົ້າ ຈາກໂຄງການດັ່ງກ່າວ ມາທົດລອງ ໂດຍການນຳໃຊ້ ແນວພັນເຂົ້າ ທ່າດອກຄຳ5 (TDK5). ເຫັນ ວ່າ ຜົນຜະລິດເຂົ້າຂອງລາວ ໄດ້ເພີ້ມ ຂຶ້ນ ຈາກ 2 - 3ໂຕນ/ ເຮັກຕາ ມາເປັນ 3 - 4 ໂຕນ/ ເຮັກຕາ. ໃນເມື່ອ ເຫັນຜົນ ຜະລິດ ເພີ້ມຂຶ້ນຄືແນວນັ້ນ ລາວຈຶ່ງ ປ່ຽນ ແນວພັນເຂົ້ານາ ທຸກໆ 3 ປີ. ນອກນັ້ນ ລາວຍັງໄດ້ຖ່າຍທອດບົດຮຽນ ວິທີການຄັດເລືອກແນວພັນເຂົ້ານາ ໃຫ້ ແກ່ຊາວນາພາຍໃນບ້ານຂອງລາວ ຕື່ມອີກ.

## ➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ. ຮັກນ້ອຍ,  ບ້ານນາໝໍ້ເໜືອ ເມືອງນາໝໍ້ ແຂວງອຸດົມໄຊ





ພື້ນທີ່ປູກເຂົ້ານາ ຂອງທ້າວຮັກນ້ອຍ

# ຫົວຂໍ້ທີ່ດີເດັ່ນ: ການປູກເຂົ້ານາປີ ວິທີການທີ່ພົ້ນເດັ່ນ: ວິທີການຕົກກ້າແບບປັກຊຳ

### ➤ ປະຫວັດຫຍໍ້ຂອງຊາວກະສິກອນ

ຊື່: ທ້າວ ສິນ ອາຍຸ: 40 ປີ, ຊົນເຜົ່າ: ໄທດຳ ອາຊີບ: ເຮັດນາ ເກີດຢູ່ບ້ານ: ນາໝໍ້ໃຕ້, ເມືອງນາໝໍ້,ແຂວງອຸດົມໄຊ, ມີລູກທັງໝົດ 4 ຄົນ. ມີອາຊີບຕົ້ນຕໍໃນການເຮັດນາ, ອາຊີບສຳຮອງແມ່ນເຮັດສວນ, ມີດິນນາ ປະມານ 0,5 ເຮັກຕາ ຊຶ່ງເປັນດິນມູນສືບທອດຈາກພໍ່ແມ່. ທ້າວ ສິນ ເປັນສະມາຊິກ ອາສາສະມັກບ້ານ.

### ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ຜ່ານມາ ທ້າວ ສິນ ໄດ້ພົບບັນຫາ ໃນການຕົກກ້າ ຄື: ການຄັດເລືອກສະຖານທີ່ຕົກກ້າ, ການຕົກກ້າແບບຫວ່ານ ເຮັດໃຫ້ຜົນຜະລິດໄດ້ໜ້ອຍ, ເວລາປູກ ເຂົ້າຈະອອກໃບຫຼາຍ, ໃຊ້ແຮງງານຫຼາຍໃນການຫຼົກກ້າ, ເຂົ້າຮວງນ້ອຍ. ດ້ວຍເຫດນີ້ ລາວຈຶ່ງຫັນມາຕົກກ້າແບບປັກຊຳ ແລະ ເຮັດໃຫ້ຜົນຜະ ລິດດີຂຶ້ນ, ລຸດຜ່ອນແຮງງານໃນການ ຫຼົກກ້າ.

### ➤ ການປະຕິບັດວິທີດັ່ງກ່າວ?

- ກະກຽມພື້ນທີ່ໂດຍການຖາງ ແລະ ເສຍຫຍ້າ.
- ກະກຽມແນວພັນ ທີ່ຄັດເລືອກໄວ້.
- ເມື່ອເຫັນວ່າ ມີຝົນຕົກ 3-5 ເທື່ອ ກໍ່ນຳເອົາແນວພັນ ໄປສັກໃນພື້ນທີ່ ທີ່ກະກຽມໄວ້.
- ການສັກ ແມ່ນນຳໃຊ້ໄມ້ທີ່ຫາໄດ້ຕາມພື້ນທີ່ກໍ່ໄດ້.
- ໄລຍະຫ່າງ ຂອງການສັກ ແມ່ນ 10 x10 ຊັງຕີແມັດ.
- ແນວພັນເຂົ້າ ທີ່ໃສ່ 1 ຈອກແກ້ວນ້ອຍຕໍ່ 3 ຂຸມ.
- ເອົາດິນປົກໜ້ອຍນຶ່ງ ເພື່ອປ້ອງກັນແມງໄມ້ ແລະ ມົດ.
- ເມື່ອຕົ້ນກ້າອາຍຸໄດ້ 20-25 ມື້ ກໍ່ສາມາດຫຼົກໄປຊຳ ໃນໃຮ່ນາ ທີ່ໄດ້ກະກຽມໄວ້.
- ນ້ຳໃນໃຮ່ນາ ທີ່ໃຊ້ຊຳກ້າ ໃຫ້ຖ້ວມປະມານ ເຄິ່ງນຶ່ງ ຂອງຕົ້ນກ້າ.
- ພາຍຫຼັງອາຍຸກ້າ ໄດ້ 30 ມື້ ກໍ່ສາມາດນຳໄປປູກໄດ້.

### ➤ ວິທີການດັ່ງກ່າວໄດ້ມາຈາກໃສ?

ທ້າວ ສິນ ໄດ້ເຕັກນິກການຕົກກ້າເຂົ້ານາແບບຊຳ ມາຈາກການໂຄສະນາຂອງຜູ້ຂາຍຢາກາປູແດງ. ພາຍຫຼັງທີ່ໄດ້ຮັບຄວາມຮູ້ດັ່ງກ່າວແລ້ວ ລາວກໍ່ນຳມາທົດລອງ ຢູ່ເນື້ອທີ່ນາຂອງລາວ ເຊິ່ງເປັນວິທີການນຶ່ງ ທີ່ລາວຍອມຮັບ ແລະ ໄດ້ຮັບຜົນດີ. ພາຍຫຼັງທີ່ລາວໄດ້ເຮັດຕາມວິທີການດັ່ງກ່າວນັ້ນ ເຫັນວ່າການອອກໃບຂອງຕົ້ນເຂົ້າຈະບໍ່ຫຼາຍ, ມີຮວງໃຫຍ່ ແລະ ເຮັດໃຫ້ຜົນຜະລິດໄດ້ເພີ້ມຂຶ້ນ.

### ➤ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ້າວ ສິນ, ບ້ານນາໝໍ້ໃຕ້ ເມືອງນາໝໍ້ ແຂວງອຸດົມໄຊ



ການກຽມດິນ ເພື່ອປັກຊຳກ້າ



ໃຮ່ນາ ທີ່ໄດ້ຄັດເລືອກ ເຮັດແນວພັນ



ທ້າວ ສິນ ບ້ານ ນາໝໍ້ໃຕ້

# ວິທີການທີ່ພົ້ນເດັ່ນ:

## ການປູກມອນ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ ແອງ ອາຍຸ 42 ປີ ຊົນເຜົ່າ ໄທດຳ, ຢູ່ ບ້ານນາໝໍ້ເໜືອ, ເມືອງນາໝໍ້, ແຂວງອຸດົມໄຊ. ມີອາຊີບຕົ້ນຕໍໃນການເຮັດນາ, ການປູກມອນ ເພື່ອລ້ຽງມ້ອນ ແມ່ນອາຊີບສຳ ຮອງ. ມີດິນສຳລັບປູກມອນ ປະມານ 50 ຕາແມັດ ເຊິ່ງເປັນ ດິນມູນ ສືບທອດຈາກພໍ່ແມ່. ນາງ ແອງ ເປັນສະມາຊິກແມ່ຍິງຂອງບ້ານ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນເມື່ອກ່ອນ ການລ້ຽງມ້ອນແມ່ນພົບກັບບັນຫາເລື້ອງການຊອກຫາອາຫານມາເກືອມ້ອນ ເພາະຕ້ອງໄດ້ອອກໄປເກັບໃບມອນ ຕາມທຳມະ ຊາດ ເຊິ່ງໄດ້ໃຊ້ເວລາໃນການຊອກຫາໃບມອນເປັນມື້ ເຮັດໃຫ້ບໍ່ມີເວລາ ໄປເຮັດວຽກອື່ນ. ດ້ວຍເຫດຜົນ ດັ່ງກ່າວນັ້ນ ນາງ ແອງ ຈຶ່ງໄດ້ນຳເອົາ ຕົ້ນມອນທີ່ເກີດໃນປ່າ ທຳມະຊາດ ມາປູກຢູ່ໃນສວນຂອງລາວ ເພື່ອເປັນການຫຼຸດຜ່ອນແຮງງານໃນການຊອກຫາໃບມອນ ເຮັດໃຫ້ມີເວລາໄປເຮັດວຽກອື່ນຫຼາຍຂຶ້ນ.

➢ **ການປະຕິບັດວິທີດັ່ງກ່າວ?**

- **ການເລືອກພື້ນທີ່:** ຕ້ອງເປັນພື້ນທີ່ຮາບພຽງ, ບໍ່ມີນ້ຳຂັງ, ດິນອຸດົມສົມບູນ ຖ້າເປັນດິນຊາຍ ຍິ່ງເປັນການດີ ເພາະຈະເຮັດໃຫ້ຕົ້ນມອນຈະເລີນເຕີບໂຕໄວ.
- **ການຂຸດຂຸມ:** ຂະໜາດຂອງຂຸມ 20 x 20 ຊັງຕີແມັດ ຫຼື ຂະໜາດຫຼົມຈົກທີ່ຂຸດ ໄລຍະຫ່າງ ລະຫວ່າງ ຕົ້ນຕໍ່ຕົ້ນ ປະມານ 2 ແມັດ.
- **ການຄັດເລືອກງ່າມອນມາປູກ:** ງ່າມອນທີ່ຈະນຳມາປູກ ຕອ້ງມີອາຍຸ 1 ປີຂຶ້ນໄປ, ມີສີນ້ຳຕານແກ່.
- **ການຕັດງ່າ:** ໃຊ້ມີດທີ່ຄົມ ຕັດງ່າ, ບໍ່ຄວນຕັດຫຼາຍເທື່ອ ເພາະຈະເຮັດໃຫ້ງ່າມອນຊ້ຳ ຄວນຈິ່ງຕາ 2-3 ຕາ ໃຫ້ສະຫຼຽງທັງສອງສົ້ນ ເພື່ອບໍ່ໃຫ້ນ້ຳຂັງເວລາຝົນຕົກ.
- **ວິທີການປູກ:** ນຳງ່າມອນມາປູກ ໂດຍເອົາງ່າລົງໃສ່ຂຸມທີ່ກຽມໄວ້ ໃຫ້ງ່າສະຫຼຽງຕິດກັບປາກຂຸມເບື້ອງນຶ່ງ ແລ້ວໃຊ້ດິນຖົມຂຸມ, ໃຊ້ນ້ຳຫົດ. ຊ່ວງປູກມອນທີ່ດີ ແມ່ນເດືອນ 5-6. ປູກໄດ້ 6 ເດືອນ ກໍ່ສາມາດເກັບໃບໄດ້.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງ ແອງ ໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການປູກມອນລ້ຽງມ້ອນ ໂດຍໂຄງການ IGA ໃນປີ 2000 ຢູ່ ຫຼັກ 58. ຫຼັງຈາກການຝຶກອົບຮົມ ລາວ ໄດ້ນຳເອົາວິທີການປູກ ມາທົດລອງນຳໃຊ້. ພາຍຫຼັງລາວນຳໃຊ້ເຕັກນິກທີ່ຮຽນມາແລ້ວ ເຮັດໃຫ້ຜົນຜະລິດຂອງຕົ້ນມອນໄດ້ຫຼາຍຂຶ້ນ. ແນວພັນມອນ ທີ່ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມສາມາດເອົາມາໃຫ້ທົດລອງນັ້ນ ບໍ່ສາມາດຈະເລີນເຕີບໂຕໄດ້ ໃນທ້ອງຖິ່ນເມື່ອພົບບັນຫາ ດັ່ງກ່າວ ນາງ ແອງ ຈຶ່ງຫັນມາປູກມອນພື້ນເມືອງຄືນ ອີງຕາມເຕັກນິກວິທີການຂອງຊາວບ້ານຈະມີພຽງແຕ່ການຄັດເລືອກງ່າມອນມາປູກນັ້ນແມ່ນໄດ້ນຳໃຊ້ເຕັກນິກຈາກການຮຽນມາ.

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ນາງ ແອງ, ບ້ານນາໝໍ້ເໜືອ, ເມືອງນາໝໍ້ ແຂວງອຸດົມໄຊ





ປູກຕົ້ນມອນ ດ້ວຍການຕັດງ່າປູກ



ການເລືອກງ່າມອນມາປູກ

# ວິທີການທີ່ພົ້ນເດັ່ນ

## ການກຳຈັດຫຍ້າ

- **ປະຫວັດຫຍໍ້ຂອງຊາວກະສິກອນ:**
  ທ້າວ ໂດຍ ອາຍຸ 27 ປີ ຊົນເຜົ່າ ໄທດຳ, ຢູ່ ບ້ານນາໝໍ້ໃຕ້, ເມືອງນາໝໍ້, ແຂວງອຸດົມໄຊ, ມີ ລູກ 2 ຄົນ, ມີດິນນາ ປະມານ 2.8 ເຮັກຕາ ເຊິ່ງເປັນດິນມູນສືບທອດມາຈາກພໍ່ແມ່ ຂອງ ລາວ.

- **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**
  ໃນເມື່ອກ່ອນ ລາວບໍ່ໄດ້ໃຊ້ຢາຂ້າຫຍ້າໃນນາເຂົ້າ ສັງເກດວ່າ ຫຍ້າຈະມີຫຼາຍເຮັດໃຫ້ເຂົ້ານາບໍ່ງາມ. ການເກັບກ່ຽວພົບຄວາມຫຍຸ້ງຍາກຍ້ອນມີຫຍ້າປົນ, ຜົນຜະລິດຫຼຸດລົງ ໃນແຕ່ລະປີ. ໂດຍສະເລ່ຍແລ້ວ ປີນຶ່ງ ລາວໄດ້ເຂົ້າພຽງແຕ່ 2-3 ໂຕນ/ເຮັກຕາ. ພາຍຫຼັງ ທີ່ລາວໄດ້ນຳໃຊ້ຢາຂ້າຫຍ້າໃນນາ ປະກົດວ່າ ຫຍ້າໃນນາເຂົ້າບໍ່ມີ, ຜົນຜະລິດກໍ່ເພີ້ມຂຶ້ນ ປະມານ 4-5 ໂຕນ/ເຮັກຕາ. ຕົ້ນທຶນໃນການຊື້ຢາກໍ່ຕ່ຳ ແກ້ວນຶ່ງ ລາຄາ ພຽງແຕ່ 10,000-15,000 ກີບ ເທົ່ານັ້ນ.

- **ການປະຕິບັດວິທີການດັ່ງກ່າວ?**
  ວິທີດັ່ງກ່າວ ມີຂັ້ນຕອນໃນການປະຕິບັດ ຄື: ຢານຶ່ງແກ້ວ ມາປະສົມກັບດິນຊາຍ ຫຼື ດິນຜົງ ອັດຕາສ່ວນ ຊາຍ 8-10 ຄຸ/ຢາ 1 ແກ້ວ( ຢາຈີນ ) ຄົນເຂົ້າກັນ ແລ້ວນຳໄປຫວ່ານໃສ່ນາທີ່ດຳໃໝ່ ບໍ່ເກີນ 3 - 5 ມື້. ຖ້າເກີນນັ້ນໄປ ຫຍ້າຈະບໍ່ຕາຍ. ພາຍຫຼັງຫວ່ານຢາແລ້ວ ໃຫ້ຮັກສາລະດັບນ້ຳໃນນາໄວ້ ໃຫ້ສະໝ່ຳສະເໝີ ໃຫ້ໄດ້ເຄິ່ງນຶ່ງຂອງຕົ້ນເຂົ້າ ໄວ້ເປັນເວລາ 5 ມື້. ໃນນຶ່ງເຮັກຕາ ຕ້ອງໄດ້ໃຊ້ຢາ 2 ແກ້ວ. ໃນເວລາຝົນຕົກ ບໍ່ຄວນຫວ່ານຢາ ເພາະນ້ຳຝົນຈະເຊາະລ້າງເອົາຢາໄປໝົດ.

- **ວິທີການດັ່ງກ່າວໄດ້ມາຈາກໃສ?**
  ທ້າວ ໂດຍ ໄດ້ຖອດຖອນບົດຮຽນ ແລະ ຄວາມຮູ້ ມາຈາກຄົນຈີນ ທີ່ມາປະຈຳຢູບ້ານ ໃນຊ່ວງ ປີ 2004. ລາວໄດ້ນຳເອົາບົດຮຽນດັ່ງກາວ ມາທົດລອງ ຢູ່ນາຂອງລາວ ຜົນອອກມາເຫັນວ່າ ຫຍ້າໃນນາໄດ້ຫຼຸດລົງ ເຮັດໃຫ້ຜົນຜະລິດເພີ້ມຂຶ້ນ. ຈາກນັ້ນມາ ລາວຈຶ່ງໄດ້ສືບຕໍ່ ປະຕິບັດວິທີການ ຂ້າຫຍ້າໃນນາເຂົ້າດ້ວຍຢາຂ້າຫຍ້າມາຕະຫຼອດ ຈົນເຖິງປະຈຸບັນ.

- **ຕິດຕໍ່ຂໍ້ມູນເພີ້ມເຕີມ ຕິດຕໍ່:**

ທ້າວ ໂດຍ, ບ້ານນາໝໍ້ໃຕ້, ເມືອງນາໝໍ້ ແຂວງອຸດົມໄຊ,
ໂທລະສັບ: 020 6927962 ແລະ 0209796388



ຊາວກະສິກອນດີເດັ່ນ



ເຂົ້ານາ ຂອງ ທ້າວ ໂດຍ ທີ່ໃກ້ຈະເກັບກ່ຽວ

# ວິທີການທີ່ພົ້ນເດັ່ນ

## ການລ້ຽງມ້ອນ

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ນາງ ຕຽນ, ບ້ານນາໝໍ້ເໜືອ
ເມືອງນາໝໍ້ ແຂວງອຸດົມໄຊ



➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ ຕຽນ ອາຍຸ 42 ປີ ຊົນເຜົ່າ ໄທດຳ ຢູ່ ບ້ານນາໝໍ້ເໜືອ ເມືອງນາໝໍ້ ແຂວງອຸດົມໄຊ. ມີລູກ ທັງໝົດ 6 ຄົນ, ອາຊີບຕົ້ນຕໍ ແມ່ນເຮັດນາ, ການເຮັດສວນ ແລະ ປູກມອນລ້ຽງມ້ອນ ແມ່ນອາຊີບສຳຮອງ. ລາວມີເນື້ອທີ່ປູກຕົ້ນມອນ 0.5 ເຮັກຕາ ຊຶ່ງເປັນດິນສືບທອດ ຈາກພໍ່ແມ່. ນາງ ຕຽນ ເປັນສະມາຊິກສະຫະພັນແມ່ຍິງຂອງບ້ານ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນໄລຍະຜ່ານມາ ນາງ ຕຽນ ໄດ້ພົບບັນຫາໃນການລ້ຽງມ້ອນ ຄື: ໃນເວລາຊອກຫາໃບມອນ ມາເກືອມ້ອນ ຕ້ອງໄດ້ໃຊ້ເວລາຫຼາຍ ຍ້ອນອາໄສເກັບເອົາໃບມອນຈາກປ່າ. ນອກນັ້ນ ຍັງມີແມງວັນດຳ ຫຼື ໂຕໂປມ ມາກິນມ້ອນ. ພາຍຫຼັງທີ່ພົບບັນຫາດັ່ງກ່າວ ລາວໄດ້ຊອກແນວພັນມອນ ທີ່ມີຢູ່ໃນປ່າ ມາປູກໃນສວນ. ມັນເປັນວິທີການນຶ່ງ ທີ່ສາມາດຫຼຸດຜ່ອນແຮງງານ ໃນການໄປ ຊອກເກັບໃບມອນ.

➢ **ການປະຕິບັດວິທີດັ່ງກ່າວ?**

ນຳເອົາມ້ອນ ທີ່ຫາກໍ່ແຕກອອກມາໃໝ່ໆ ໃສ່ໃນຫອບ ຫຼື ດົ້ງ ແລ້ວຈຶ່ງໃຫ້ ອາຫານ. ການໃຫ້ອາຫານໂຕມ້ອນ ມີ 4 ໄລຍະ ໂດຍອີງໃສ່ການນອນຂອງ ໂຕມ້ອນ ນັບແຕ່ເກີດ ຈົນເຖິງມື້ສາວໄໝ ຈະໃຊ້ເວລານອນຢູ່ 4 ຄັ້ງ. ນອນ ຄັ້ງທີ 1 ອາຍຸໄດ້ 5 ມື້, ໃຫ້ອາຫານດ້ວຍຍອດຂອງໃບມອນ; ນອນຄັ້ງທີ 2 ອາຍຸໄດ້ 10 ມື້, ໃຫ້ອາຫານ ໂດຍການຊອຍໃບມອນອ່ອນໃຫ້ກິນ; ນອນ ຄັ້ງທີ 3 ອາຍຸໄດ້ 15 ມື້ ຈີກໃບມອນໃຫ້ກິນເລີຍ ໂດຍບໍ່ຕ້ອງຊອຍ; ນອນຄັ້ງທີ 4 ອາຍຸໄດ້ 20 ມື້ ສາມາດໃຫ້ອາຫານ ດ້ວຍກິ່ງ, ງ່າ ແລະ ໃບມອນ ໂດຍບໍ່ຕ້ອງຊອຍ ຫຼື ຈີກ. ຫຼັງຈາກນັ້ນ 8 – 10 ມື້ ຫຼື ອາຍຸມອນ ໄດ້ 28 – 30 ມື້ ກໍ່ສາມາດ ສາວໄໝໄດ້.



ໂຕມ້ອນກຳລັງນອນ ຄັ້ງທີ 1

- ຂໍ້ຄວນລະວັງໃນການລ້ຽງມ້ອນ:
  – ເວລາທີ່ເກືອ ບໍ່ຄວນໃສ່ນ້ຳຫອມ ຫຼື ສະບູ
  – ເວລາແຕ່ງກິນ ບໍ່ໃຫ້ກິ່ນຖືກໂຕມ້ອນ ເຊັ່ນ: ນ້ຳມັນພືດ,ຈີ່ໜັງ...
  – ເວລາໃຫ້ອາຫານ ບໍ່ຄວນໃຫ້ໃບມອນອ່ອນຫຼາຍເກີນໄປ ເພາະຈະເຮັດໃຫ້ສາວໄໝໄດ້ຍາກ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງ ຕຽນ ໄດ້ຮຽນຮູ້ການປູກມອນ ເພື່ອລ້ຽງມ້ອນ ມາຈາກພໍ່ແມ່ ທີ່ສືບທອດກັນມາແຕ່ປູ່ຍ່າຕາຍາຍ ຊຶ່ງລາວເຫັນວ່າ ເປັນວິທີທີ່ດີ ແລະ ສາມາດສ້າງລາຍຮັບເພີ້ມໃຫ້ຄອບຄົວ.



ໂຕມ້ອນທີ່ຫາກໍ່ຕື່ນນອນ ຄັ້ງທີ 2

# ວິທີການທີ່ພົ້ນເດັ່ນ

## ການສາວໄໝ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ ຮັກ ອາຍຸ 48 ປີ ຊົນເຜົ່າ ໄທດຳ ຢູ່ ບ້ານນາໝໍ້ເໜືອ ເມືອງນາໝໍ້ ແຂວງ ອຸດົມໄຊ, ມີລູກທັງໝົດ 11 ຄົນ, ອາຊີບຕົ້ນຕໍ ແມ່ນຊາວນາ. ມີທີ່ດິນປູກມອນ ແລະ ໄມ້ໃຫ້ໝາກ ທັງໝົດ ປະມານ 1 ເຮັກຕາ ເຊິ່ງເປັນດິນສິນສ້າງ ຂອງ ຄອບຄົວລາວເອງ. ນາງ ຮັກ ເປັນຄະນະສະຫະພັນ ແມ່ຍິງ ຂອງບ້ານ ແລະ ມີ ຄວາມຊຳນິຊຳນານ ໃນການສາວໄໝ ເປັນພິເສດ, ຜົວ ຂອງລາວ ເປັນ ຫົວໜ້າກອງຫຼອນ ເຂດກຸ່ມບ້ານນາໝໍ້ເໜືອ, ສ່ວນລູກ 2 ຄົນ ຮຽນຢູ່ຊັ້ນປະຖົມ ແລະ ມັດທະຍົມຕອນປາຍ ແລະ ອີກຜູ້ນຶ່ງ ຮຽນວິຊາຊີບ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ສະພາບດິນຟ້າອາກາດ, ການບົວລະບັດຮັກສາ ແລະ ການໃຫ້ອາຫານມ້ອນ ມີ ຄວາມສຳຄັນ ຕໍ່ການສາວໄໝ ເພາະຖ້າເຮັດບໍ່ໄດ້ດີ ຈະເຮັດໃຫ້ໄໝ ສາວບໍ່ ອອກ ຫຼື ເອີ້ນຕາມສັບທ້ອງຖິ່ນວ່າ ມ້ອນປຽກ.

- **ສາຍເຫດ 1:** ມ້ອນປຽກ ແມ່ນເກີດຈາກເອົາໃບມອນແນວພັນອື່ນທີ່ແຕກ ຕ່າງຈາກແນວພັນທ້ອງຖິ່ນມາເກືອ ຍ້ອນລາວໄດ້ຍິນຈາກການບອກເລົ່າ ຂອງບ້ານໃກ້ຄຽງ ແລ້ວຢາກທົດລອງວ່າ ຈະໄດ້ຜົນດີກວ່າເກົ່າ ເມື່ອລາວມາ ທົດລອງເກືອ ກໍ່ພົບບັນຫາສາວໄໝບໍ່ອອກ.
- **ວິທີແກ້ໄຂ:** ແມ່ນລາວໄດ້ກັບມາປູກແນວພັນພື້ນເມືອງຄືນໃໝ່.
- **ສາຍເຫດ 2:** ໃນລະດູຝົນ ບາງຄັ້ງ ລາວໄດ້ເອົາໃບມອນທີ່ປຽກຝົນມາເກືອ ອັນນີ້ ກໍ່ເປັນສາຍເຫດນຶ່ງ ທີ່ສາວໄໝບໍ່ອອກ.
- **ວິທີແກ້ໄຂ:** ລາວໄດ້ເອົາໃບມອນທີ່ປຽກຝົນມາປະໄວ້ບ່ອນຮົ່ມ ໃຫ້ໃບມອນ ແຫ້ງ ແລ້ວຈຶ່ງນຳມາເກືອມ້ອນ.

➢ **ການປະຕິບັດວິທີດັ່ງກ່າວ?**

ວິທີການສາວໄໝ ແມ່ນຈະນຳເອົານ້ຳມາຕົ້ມໃສ່ໝໍ້ ໂດຍໃຊ້ໄຟຂະໜາດກາງ ຕົ້ມນ້ຳໃຫ້ຟົດ ປະມານ 60-70 ອົງສາ ຫຼື ນ້ຳຟົດພໍມີຟອດຂຶ້ນໜ້ອຍນຶ່ງ ຕາມ ສັບຊາວບ້ານ ທີ່ເຄີຍເວົ້າວ່າ ຟົດຊີ່ງພໍຈີ່ປູ ຫຼັງຈາກນັ້ນ ເອົາຝັກມ້ອນ ປະມານ 1 ກຳມືລົງໃສ່ໝໍ້ແລ້ວໃຊ້ໄມ້ຈຸ່ມ (ໄມ້ມີລັກສະນະເປັນໄມ້ຄີບສອງອັນ) ເພື່ອ ສາວເອົາ ເສັ້ນໄໝ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງ ຮັກ ບໍ່ໄດ້ຮຽນຮູ້ເຕັກນິກ ວິທີການສາວໄໝ ຈາກໂຄງການ ຫຼື ຈາກບ່ອນອື່ນ ລາວໄດ້ຮຽນຮູ້ ຈາກພໍ່ແມ່ ຊຶ່ງເປັນການສືບທອດມາແຕ່ປູ່ຍາຕາຍາຍ ທີ່ເຄີຍໄດ້ ປະຕິບັດກັນມາ.

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ນາງ ຮັກ, ບ້ານນາໝໍ້ເໜືອ, ເມືອງນາໝໍ້ ແຂວງອຸດົມໄຊ





ຝັກມ້ອນທີ່ບໍ່ໄດ້ສາວເອົາໄໝ



ນາງ ຮັກ ສາທິດວິທີການສາວໄໝ

# ວິທີການທີ່ພົ້ນເດັ່ນ

## ການຄັດເລືອກແນວພັນ ແລະ ປະສົມພັນ ມ້ອນ

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ນາງ ສອງ, ບ້ານນາໝໍ້ເໜືອ, ເມືອງນາໝໍ້ ແຂວງອຸດົມໄຊ



ຊາວກະສິກອນດີເດັ່ນ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ ສອງ ອາຍຸ 42 ປີ ຊົນເຜົ່າ ໄທດຳ ຢູ່ບ້ານນາໝໍ້ເໜືອ ເມືອງນາໝໍ້ ແຂວງ ອຸດົມໄຊ, ມີລູກ 4 ຄົນ, ມີອາຊີບ ໃນການເຮັດນາ, ລາວມີທີ່ດິນ ສຳລັບ ປູກ ມອນ ແລະ ເຮັດນາ ປະມານ 1 ເຮັກຕາ ເຊິ່ງເປັນດິນມູນສືບທອດມາຈາກພໍ່ ແມ່. ນາງ ສອງ ເປັນຫົວໜ້າສະຫະພັນແມ່ຍິງບ້ານ. ຜົວຂອງລາວ ເປັນ ພະນັກງານ ຢູ່ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ.

➢ **ການປະຕິບັດວິທີດັ່ງກ່າວ?**

- ລັກສະນະການເລືອກຝັກມ້ອນ ໂຕຜູ້ ແລະ ໂຕແມ່
  - ຝັກໂຕຜູ້ ຈະນ້ອຍ ແລະ ສັ້ນ
  - ຝັກໂຕແມ່ຈະໃຫຍ່ ແລະ ຍາວກວ່າ
- ການເລືອກໂຕມ້ອນໃນຝັກ ຕ້ອງແມ່ນຜູ້ທີ່ມີຄວາມຊົນເຄີຍ ແລະ ຮູ້ຈັກ ສັງເກດ ຄື: ຈັບຝັກມ້ອນມາສັ່ນເບິ່ງ ຖ້າສຽງດັງແຮງ ແລະ ໜັກ ໝາຍ ຄວາມວ່າ ຝັກນັ້ນ ເປັນໂຕແມ່, ຖ້າສຽງດັງຄ່ອຍ ແລະ ເບົາ ຝັກນັ້ນແມ່ນ ໂຕຜູ້ ຫຼັງຈາກນັ້ນ ປະໄວ້ ມ້ອນຈະກັດຝັກອອກມາເອງ ໂດຍໃຊ້ເວລາປະ ມານ 13 ຫາ 15 ມື້.
- ການເລືອກໂຕມ້ອນ ຫຼັງຈາກອອກມາຈາກຝັກ: ຕົວແມ່ ຈະຕຸ້ຍກວ່າໂຕຜູ້ ແລະ ມີປີກສັ້ນ, ສ່ວນໂຕຜູ້ ຈະມີປີກຍາວ ແລະ ຈ່ອຍກວ່າໂຕແມ່.
- ການປະສົມພັນ ນຳເອົາໂຕຜູ້ ແລະ ໂຕແມ່ ປ່ອຍໃສ່ຫອບ ຫຼື ກະດົ້ງທີ່ປູ ດ້ວຍແພຂາວ ຫຼັງຈາກນັ້ນ ມັນຈະຊອກ ຈັບຄູ່ກັນເອງ. ເວລາປ່ອຍແມ່ນ ຕອນເຊົ້າ ເວລາໜຶ້ງເຂົ້າເຊົ້າ ແລະ ຈະແຍກອອກຈາກກັນ ໃນຕອນແລງ ເວລາໜຶ້ງເຂົ້າແລງ. ເຮັດແນວນັ້ນ ຕິດຕໍ່ກັນ 2 ມື້ ຈຶ່ງແຍກເອົາໂຕແມ່ ອອກໃສ່ຫອບທີ່ປູດ້ວຍແຜຂາວ ເອົາຖ້ວຍງວມໄວ້ ໂດຍເອົາໝາກເຜັດ, ເຂົ້າສານ ແລະ ຖ່ານໄຟ ຍອງໃສ່ເທິງກົ້ນຖ້ວຍ ເພື່ອໃຫ້ມ້ອນ ຮ້ອນກົ້ນ, ໄຂ່ໄວ ແລະ ໄດ້ໄຂ່ຫຼາຍ ຄືເຂົ້າສານ (ອີງຕາມຄວາມເຊື່ອຂອງຊາວບ້ານ) ຫຼັງຈາກນັ້ນ ໃຫ້ເອົາແມ່ມ້ອນອອກ, ນຳເອົາໄຂ່ທີ່ຕິດຢູ່ຜ້າແພ, ມັດເປັນ ຈຸກ ແລ້ວເອົາໄປຫ້ອຍໄວ້ຂ້າງເຕົາໄຟ ໃນເຮືອນຄົວ ເພື່ອປ້ອງກັນບໍ່ໃຫ້ ມົດ ແລະ ແມງໄມ້ ເຂົ້າທຳລາຍໄຂ່. ປະໄວ້ ປະມານ 15 ມື້ ໄຂ່ກໍ່ຈະແຕກ ອອກມາເປັນໂຕມ້ອນນ້ອຍ ແລ້ວຈຶ່ງນຳເອົາໄປລ້ຽງໃສ່ຫອບ ຫຼື ດົ້ງ.



ແນວພັນໂຕແມ່ ແນວພັນໂຕຜູ້



ການຈັບຄູ່ປະສົມພັນ ຂອງມ້ອນ

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງ ສອງ ໄດ້ບົດຮຽນຈາກພໍ່ແມ່ ທີ່ສືບທອດກັນມາແຕ່ປູ່ຍາຕາຍາຍ.

# ວິທີການທີ່ພົ້ນເດັ່ນ :

## ການສັກຢາປ້ອງກັນພະຍາດໝູ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ້າວ.ບຸນເຮືອງ ອາຍຸ:44ປີ, ຊົນເຜົ່າ:ກຶມມຸ ເກີດທີ່:ບ.ນ້ຳບໍ່ຕາໄກ່,ມ.ນາໝໍ້,ຂ.ອຸດົມໄຊ ອາຊີບ: ເຮັດນາ(ປ້ອງກັນບ້ານ), ແຮງງານ: ຕົ້ນຕໍ 4 ຄົນ, ສຳຮອງ 7 ຄົນ.

ເບື້ອງຕົ້ນຄອບຄົວແມ່ນມີອາຊີບເຮັດນາ(1ຮຕ),ສວນສາລີ(1,2ຮຕ) ແລະສວນໝາກເຍົາ(1,5ຮຕ), ສວນຜັກ(ໃນເນື້ອທີ່ນາ) ພ້ອມທັງລ້ຽງສັດປີກອີກຈຳນວນໜຶ່ງ ເຊິ່ງປະຈຸບັນລາວເອງມີໝູຢູ່ 11ໂຕ ເຊິ່ງໃນນັ້ນມີໝູແມ່ພັນ 3ໂຕ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນເບື້ອງຕົ້ນຂອງການລ້ຽງ ແມ່ນອັດຕາການຕາຍສູງ ເນື່ອງຈາກວ່າລ້ຽງໝູໃນເຂດນີ້ແມ່ນປ່ອຍແບບທຳມະຊາດ ບໍ່ໄດ້ມີການສັກຢາປ້ອງກັນພະຍາດ ເວລາໝູເກີດພະຍາດກໍ່ຕິດແປດພາໃຫ້ໝູໝົດເຂດບ້ານຕາຍຈຳນວນຫຼາຍ, ໃນແຕ່ລະປີພາໃຫ້ຂາດທຶນ, ລາວທໍ້ຖອຍໃຈ ພາຍຫຼັງໄດ້ເຂົ້າຮ່ວມຝຶກອົບຮົມຈິ່ງເຂົ້າໃຈ ແລະລິເລີ້ມການລ້ຽງໝູຂອງຕົນເອງຄືນໃໝ່.

➢ **ການປະຕິບັດວິທີດັ່ງກ່າວ?**

ໃນການລ້ຽງໝູສະເພາະຄອບຄົວຂອງລາວແມ່ນຈະສັກຢາໃຫ້ສະເພາະແຕ່ໝູໃຫຍ່ເທົ່ານັ້ນ, ສ່ວນໝູທີ່ເກີດໃໝ່(ໝູນ້ອຍ)ແມ່ນຈະຢອດຢາປ້ອງກັນພະຍາດໃຫ້ ເຊິ່ງຂັ້ນຕອນການປະຕິບັດຕົວຈິງມີຄື:

1. ພາຍຫຼັງໝູນ້ອຍເກີດໄດ້ 1ເດືອນ, ແມ່ນຈະນຳໃຊ້ຢາຄູໍໂລແລມ ເພື່ອຢອດໃສ່ປາກ (ໃນອັດຕາສ່ວນ: 3 ຢອດ/ໂຕ/ເທື່ອ).
2. ຫຼັງຈາກໝູອາຍຸໄດ້ 3ເດືອນ, ແມ່ນຈະນຳໃຊ້ຢາວັກຊີນອະຫິວາໝູ ເພື່ອສັກໃສ່ກ້າມຊີ້ນ ຫຼື ຫລືບໜັງ (ໃນອັດຕາສ່ວນ: 1 ຊີຊີ/ໂຕ/ເທື່ອ)
3. ສຳລັບໝູທີ່ມີນ້ຳໜັກ 30ກິໂລຂຶ້ນໄປ, ແມ່ນຈະນຳໃຊ້ຢາວັກຊີນອະຫິວາໝູ ເພື່ອສັກໃສ່ກ້າມຊີ້ນ ຫຼື ຫລືບໜັງ (ໃນອັດຕາສ່ວນ: 2 ຊີຊີ/ໂຕ/ເທື່ອ) ແລະ ສັກທຸກໆ 3ເດືອນ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ວິທີການດັ່ງກ່າວແມ່ນໄດ້ຈາກການເຂົ້າຮ່ວມຝຶກອົບຮົມການປ້ອງກັນພະຍາດສັດຂັ້ນບ້ານ, ສະໜັບສະໜູນໂດຍໂຄງການອີຢູ ເຊິ່ງແມ່ນພະນັກງານກະສິກຳເມືອງຝຶກສອນໃຫ້ ໃນຊ່ວງໄລຍະປີ2008, ສັດຕະວະແພດບ້ານກໍ່ໄດ້ມາສັກຢາປ້ອງກັນພະຍາດໃຫ້ 1ຄັ້ງ, ຕໍ່ມາລາວເປັນຜູ້ສັກຢາໝູດ້ວຍຕົນເອງຕະຫຼອດມາ (ປະຈຸບັນລາວເອງກໍ່ແມ່ນຜູ້ໜຶ່ງຢູ່ໃນບ້ານທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການໃນການສັກຢາປ້ອງກັນພະຍາດໝູ).

➢ ຕິດຕໍ່ຂໍ້ມູນເພີ່ມເຕີມ: 9796554
ທ.ບຸນເຮືອງ
ບ.ນ້ຳບໍຕາໄກ່, ມ.ນາໝໍ້ ຂ.ອຸດົມໄຊ



ຊາວກະສິກອນດີເດັ່ນ



ຈັບໝູເພື່ອສັກຢາປ້ອງກັນພະຍາດ



ໝູນ້ອຍທີ່ຢອດຢາແລ້ວ



ໝູນ້ອຍອາຍຸໄດ້ 3 ເດືອນ

# ວິທີການທີ່ພົ້ນເດັ່ນ :

## ການປຸກສ້າງຄອກສຳລັບລ້ຽງສັດປີກ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ຊື່: ນາງ.ອິນ, ອາຍຸ: 45ປີ, ຊົນເຜົ່າ: ລາວລຸ່ມ, ບ້ານເກີດ: ບ.ນາທົ່ງ ມ.ນາໝໍ້,ຂ.ອຸດົມໄຊ (ບ້ານຢູ່ປະຈຸບັນ) ອາຊີບ: ເຮັດນາ ແຮງງານ: ຕົ້ນຕໍ 2ຄົນ ແລະ ສຳຮອງ 2ຄົນ

ຄອບຄົວຂອງລາວແມ່ນໄດ້ເຮັດການຜະລິດຫຼາຍກິດຈະກຳເຊັ່ນ: ການເຮັດນາ (0,79ຮຕ) ເນື້ອທີ່ດັ່ງກ່າວໃນລະດູແລ້ງແມ່ນປູກຜັກ ແລະ ມີໝູ4ໂຕ, ສ່ວນການລ້ຽງສັດປີກແມ່ນມີທັງໝົດ: 50ໂຕ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ຜ່ານມາບັນຫາຂອງການລ້ຽງໄກ່ແມ່ນມີເຫງັນ, ແຫລວ ແລະ ໝູ (ມາກັດກິນທັງໄກ່ ແລະ ສັດປີກອື່ນໆ) ພາໃຫ້ສັດປີກຕາຍ ເສຍຫາຍເປັນຈຳນວນຫຼາຍໃນແຕ່ລະມື້, ພ້ອມກັນນັ້ນກໍ່ມີຄົນມາລັກໃນເວລາກາງຄືນ, ດັ່ງນັ້ນ,ຈິ່ງຊອກຫາວິທີການສ້າງຄອກເພື່ອແກ້ໄຂ ແລະ ປ້ອງກັນສິ່ງທີ່ເກີດຂື້ນ.

➢ **ການປະຕິບັດວິທີດັ່ງກ່າວ?**

ການສ້າງຄອກຂອງລາວລົງທຶນພຽງແຕ່:100.000 ກວ່າກີບເທົ່ານັ້ນ ລາຍລະອຽດຂອງການສ້າງຄອກດັ່ງນີ້:

1. ຄອກຂອງລາວມຸງດ້ວຍຫຍ້າ ອ້ອມດ້ວຍຝາໄມ້ປ່ອງ ຕອກໄມ້ເຊັ່ນອ້ອມຕີນເປັນຕາກະໂລນ້ອຍ ເພື່ອປ້ອງກັນສັດປະເພດເລືອຄານ ແລະ ເຮັດບ່ອນລ໋ອກ 2ຊຸດຄື: ກະແຈໃສ່ປະຕູ ແລະ ເຫຼັກເສັ້ນຟີ6.
2. ພາຍໃນຄອກແມ່ນແບ່ງອອກເປັນ 2ສ່ວນຄື: ຫ້ອງສຳລັບໂຕແມ່ ໂຕນ້ອຍພ້ອມທັງຮາງອາຫານ, ນ້ຳ ແລະ ຮັງຟັກໄຂ່, ສ່ວນຫ້ອງທາງນອກແມ່ນສຳລັບໂຕໃຫຍ່ ມີຄອນນອນຮາງອາຫານຮາງນ້ຳ.
3. ຄອກຕ້ອງຮັບປະກັນບໍ່ໃຫ້ຝົນຜະໄດ້ ພ້ອມທັງອານາໄມ້ທຸກໆ1ເດືອນ ແລະອ້ອມຮົ້ວເພື່ອໃຫ້ໄກ່ໄດ້ມີບ່ອນຢ່າງໄປມາ, ຕີນຮົ້ວຕ້ອງສານກະແຕະ ເພື່ອປ້ອງກັນສັດຕູສັດປີກ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ວິທີການສ້າງຄອກດັ່ງກ່າວແມ່ນໄດ້ຄົ້ນຄິດ ແລະທົດສອບດ້ວຍຕົນເອງ ເນື້ອງຈາກວ່າຄອບຄົວຂອງລາວລ້ຽງສັດປີກຢູ່ສວນ ເຊິ່ງຫ່າງຈາກບ້ານປະມານ: 200 ແມັດ ແລະ ໃກ້ກັບແຄມທາງລົດ, ຫ້ວຍທີ່ມີຜູ້ຄົນທ່ຽວໄປມາ.

(ປະຈຸບັນແມ່ນກຳລັງຄົ້ນຄິດການປ້ອງກັນແຫລວທີ່ກິນສັດປີກເວລາກາງເວັນ)

➢ ຕິດຕໍ່ຂໍ້ມູນເພີ່ມເຕີມ: 5138014

ທ.ອິນ

ບ.ນາທົ່ງ, ມ.ນາໝໍ້, ຂ.ອຸດົມໄຊ



ຊາວກະສິກອນດີເດັ່ນ



ການເອົາຢາປະສົມນ້ຳໃຫ້ໄກ່ນ້ອຍ



ການຈັດແບ່ງພາຍໃນຄອກ



ຄອກໄກ່ນ້ອຍ ແລະ ເປັດນ້ອຍ

## ຫົວຂໍ້ທີ່ດີເດັ່ນ: ການລ້ຽງໄກ່ລາດ   ວິທີການທີ່ພົ້ນເດັ່ນ : ການນຳໃຊ້ຢາພື້ນເມືອງເຂົ້າໃນການລ້ຽງໄກ່

### ➢ ປະຫວັດຫຍໍ້ຂອງຊາວກະສິກອນ:

ຊື່: ນາງ.ໝັ້ນ   ອາຍຸ:46ປີ
ຊົນເຜົ່າ: ກຶມມຸ   ອາຊີບ: ເຮັດນາ
ບ້ານເກີດ: ບ.ນ້ຳວີນໃຕ້, ມ.ນາໝໍ້, ຂ.ອຸດົມໄຊ (ແລະຍັງອາໃສຢູ່ເຖິງປະຈຸບັນ).

ຫຼັງຈາກຂາຍແລະ ນຳໃຊ້ໄກ່ຢູ່ພາຍໃນຄອບຄົວແລ້ວ ປະຈຸບັນຍັງເຫຼືອໄກ່ 100 ກ່ວາໂຕ, ມີແຮງງານຕົ້ນຕໍ 2ຄົນ, ສຳຮອງ 3ຄົນ.

ນອກຈາກການລ້ຽງໄກ່ແລ້ວຍັງໄດ້ເຮັດນາ (1,6ຮຕ), ສວນສາລີ (2ຮຕ) ລາຍຮັບຈາກການຂາຍໄກ່ສະເພາະຂອງຄອບຄົວລາວແມ່ນ: 3 ລ້ານກີບ/ປີ.

### ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ເມື່ອກ່ອນການລ້ຽງໄກ່ແມ່ນຕາມມີຕາມເກີດເຫຼືອຕາຍກໍ່ແມ່ນໄດ້ກິນ (ບໍ່ພໍໄດ້ຂາຍ) ລ້ຽງພໍໃຫ້ມີແນວໄວ້ໃນຄອບໃນແຕ່ລະປີແມ່ນມີໄກ່ຕາຍເປັນຈຳນວນຫຼາຍ ຫຼື ທີ່ເອີ້ນວ່າໄກ່ຕາຍຫ່າ, ເປັນສາເຫດພາໃຫ້ບໍ່ຢາກລ້ຽງ ເພາະລ້ຽງຫຼາຍກໍ່ຕາຍຫຼາຍ, ເລື່ອງສັກຢາປ້ອງກັນກໍ່ບໍ່ຮູ້ບ່ອນຊື້ຢາກໍ່ບໍ່ມີ, ຈຶ່ງທົດລອງນຳໃຊ້ສູດຢາສະໝຸນໄພເພື່ອລ້ຽງໄກ່.

### ➢ ການປະຕິບັດວິທີດັ່ງກ່າວ?

1. ສູດນີ້ຊ່ວຍໃຫ້ໄກ່ບໍ່ເຫງົາ

- ກະທຽມ: 2 ຫົວ (ພັນພື້ນເມືອງ)
- ເຄືອເຂົາຮໍ: 3 ທ່ອນ (ທ່ອນລະ 1ຄືບ)
- ຫົວສີໄຄ: 3 ຫົວ (ທຳມະດາ)

ນຳເອົາທັງ 3ຢ່າງມາທຸບໃຫ້ແຕກດີ ຫຼື ຕຳກໍ່ໄດ້, ແລ້ວນຳມາໃສ່ຖ້ວຍແກງໃຫຍ່ ເອົານ້ຳຖອກໃສ່ພໍດີເຕັມແລ້ວແຊ່ປະໄວ້ 1ຄືນ, ເຊິ່ງນ້ຳທີ່ໄດ້ແມ່ນມີກິ່ນຫອມແລະມີສີມ້ວງ, ຫຼັງຈາກນັ້ນຕອງເອົາແຕ່ນ້ຳໄປໃຫ້ໄກ່ກິນຕ່າງນ້ຳ(ຕອນເຊົ້າ) ອາທິດລະເທື່ອ.

2. ສູດນີ້ສຳລັບພະຍາດຂີ້ຂາວ, ຫາຍໃຈຫອບ ແລະ ພະຍາດອະຫິວາສັດປີກ

ເຄືອເຂົາຮໍ, ຫົວສີໄຄເຄື່ອງ, ຫົວສີໄຄ ໃບໝາກພິລາ, ໃບໝາກສີດາ(ແດງ) ໃບຂົມກະເດົາ (ແນວລະ 1 ກິໂລ)

ມາຟັກໃຫ້ມຸ່ນ, ເອົາໄປຕົ້ມປົນກັນໃຫ້ພິດ (ປະໃຫ້ເຢັນ) ຫຼັງຈາກນັ້ນເອົາສະແລງມາດູດ

ກ. 2ຊີຊີ/ໂຕ (ໄກ່ນ້ອຍ)
ຂ. 5ຊີຊີ /ໂຕ (ໄກ່ໃຫຍ່)

ສີດເຂົ້າປາກໄກ່ເລີຍ 2ອາທິດ/ເທື່ອ ນອກຈາກນັ້ນເອົາມາຖອກໃສ່ຮາງແລ້ວປະໄວ້ປະຕູຄອກໄກ່ເຂົ້າ-ອອກ ໃຫ້ໄກ່ຢຽບເວລາອອກແລະເຂົ້າຄອກເພື່ອເປັນການຂ້າເຊື້ອ.

### ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ວິທີການນີ້ແມ່ນໄດ້ມາຈາກການແນະນຳຂອງນາງ.ກຸລາບ ເຊິ່ງເປັນຄູຝຶກມາຈາກສູນກາງຝຶກໃຫ້ຢູ່ທີ່ຫ້ອງການສາທາເມືອງນາໝໍ້, ໃນປີ2007.

ຫຼັງຈາກນັ້ນກໍ່ໄດ້ນຳໃຊ້ວິທີການດັ່ງກ່າວເຂົ້າສູ່ການລ້ຽງໄກ່ແລະເຫັນວ່າໄກ່ໃຫຍ່ໄວ,ບໍ່ຕາຍ ແລະ ຄອບຄົວອື່ນໆຢູ່ພາຍໃນບ້ານກໍ່ໄດ້ມາຮຽນຮູ້ນຳລາວ.

ລາວກໍ່ຍັງສືບຕໍ່ນຳໃຊ້ວິທີການດັ່ງກ່າວນີ້ ປະສົມປະສານກັບການສັກຢາວັກຊີນ ຈົນມາຮອດປະຈຸບັນ.

### ➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ນ.ໝັ້ນ
ບ.ນ້ຳວີນໃຕ້, ມ. ນາໝໍ້, ຂ.ອຸດົມໄຊ



ນາງ.ໝັ້ນ (ຊາວກະສິກອນດີເດັ່ນ)



ສ່ວນປະສົມຢາພື້ນເມືອງ



ວິທີການປະສົມຢາ

# ວິທີການທີ່ພົ້ນເດັ່ນ :

## ວິທີການຕົກກ້າໃຫ້ທັນລະດູການ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ. ໄມກົມ ອາຍຸ 57 ປີ ຊົນເຜົ່າລື້ ເປັນຊາວກະສິກອນຢູ່ ບ້ານ ຂວາງ ເມືອງນາໝໍ້ ແຂວງ ອຸດົມໄຊ, ຄອບຄົວຂອງລາວມີລູກ 8 ຄົນ, ແຮງງານຕົ້ນຕໍມີ 2 ຄົນ ລາວມີເນື້ອທີ່ທໍາການຜະລິດທັງໝົດ 9 ເຮັກຕາໃນນັ້ນ 3 ເຮັກຕາແມ່ນດິນນາ ແລະ ອີກ 6 ເຮັກຕາ ແມ່ນດິນສວນລາວໄດ້ປູກຢາງພາລາ ແລະ ປູກສາລີສັບຫວ່າງໃນເນື້ອທີ່ສວນຢາງຂອງລາວ ເຊິ່ງເນື້ອທີ່ດັ່ງກ່າວເປັນມູນສືບທອດມາ ຈາກພໍ່ແມ່. ຜ່ານມາ ທ້າວ ໄມກົມ ເຄີຍເປັນສະມາຊິກຊາວໜຸ່ມບ້ານ ແລະ ໄດ້ຮັບໜ້າທີ່ເປັນຄະນະບ້ານ. ຫຼັງຈາກອໍາລາຈາກໜ້າທີ່ດັ່ງກ່າວລາວໄດ້ມາເຮັດການຜະລິດເປັນອາຊີບຫຼັກຈົນເຖິງປະຈຸບັນ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນໄລຍະຜ່ານມາການຕົກກ້າຂອງຊາວກະສິກອນສ່ວນຫຼາຍຍັງຊັກຊ້າປ່ອຍໃຫ້ລະດູການຜ່ານໄປເຊິ່ງເຮັດໃຫ້ຕົ້ນກ້າແກ່ເກີນໄປ, ເວລາປັກດໍາເຮັດໃຫ້ຕົ້ນເຂົ້າເຕີບໃຫຍ່ບໍ່ສະໝໍ່າສະເໝີກັນ, ອອກບົ່ວຫຼາຍ ເລີຍໄດ້ຮັບຜົນຜະລິດໜ້ອຍ. ດັ່ງນັ້ນການຕົກກ້າໃຫ້ທັນລະດູການນີ້ສາມາດຊ່ວຍໃຫ້ຕົ້ນເຂົ້າເຕີບໃຫຍ່ສະໝໍ່າສະເໝີ, ໄດ້ຮັບຜົນຜະລິດສູງຂື້ນ.

ຖ້າທຽບໃສ່ເມື່ອ ກ່ອນການ ຜະລິດຂອງລາວແມ່ນໄດ້ຮັບພຽງແຕ່ 5 ໂຕນ/3 ເຮັກຕາ ຍ້ອນການຕົກກ້າບໍ່ທັນລະດູການຫຼັງຈາກທີ່ລາວໄດ້ເອົາໃຈໃສ່ໃນເລື້ອງການຕົກກ້າໃຫ້ທັນລະດູການແລ້ວຜົນຜະລິດລາວສູງຂຶ້ນເຖິງ 7,5 ໂຕນ/3 ເຮັກຕາ. ນັບຕັ້ງແຕ່ນັ້ນມາລາວໄດ້ນໍາໃຊ້ ວິທີການດັ່ງກ່າວເຂົ້າໃນ ການຜະລິດຂອງລາວຈົນເຖິງປະຈຸບັນ.

➢ **ການປະຕິບັດວິທີດັ່ງກ່າວ?**

ວິທີການຕົກກ້າໃຫ້ທັນລະດູການມີດັ່ງນີ້:

1. ການເລືອກແນວພັນເຂົ້າສັງເກດເບິ່ງຕົ້ນໃດທີ່ແນວພັນດີກາບຈະທໍ່ຮວງແຕ່ຕົ້ນໃດ ບໍ່ໄດ້ດີກາບຈະທໍ່ຢູ່ລຸ່ມຮວງການເລືອກແນວພັນແມ່ນ 3 ປີເລືອກເທື່ອໜຶ່ງ
2. ຖ້າຝົນຕົກຕົ້ນປີໃຫ້ໄຖປະໄວ້ປະມານ 1 ເດືອນເພື່ອໃຫ້ດິນອ່ອນ ແລ້ວກັບມາໄຖອີກເທື່ອໜຶ່ງປະໄວ້ປະມານ 9 – 10 ວັນແລ້ວຈຶ່ງຄາດ.
3. ການຕົກກ້າແມ່ນເລີ່ມຕົ້ນເດືອນ 6 ໃນເມື່ອກ້າໄດ້ອາຍຸປະມານ 25 ຫາ 28 ວັນເລີ່ມປັກດໍາ. ໂດຍໃຊ້ກ້າ 3 ຫາ 5 ຕົ້ນ/ສຸມ, ໄລຍະຫ່າງລະຫວ່າງສຸມ 17 ຫາ 20 ຊມ

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ທ້າວ ໄມກົມ ໄດ້ຮັບການຝຶກອົບຮົມນໍາວິຊາການຈີນ ແລະ ວິຊາການຂອງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງນາໝໍ້, ອີກສ່ວນໜຶ່ງແມ່ນໄດ້ມາຈາກຍາດພີ່ນ້ອງ. ຫຼັງຈາກໄດ້ຮັບການຝຶກອົບຮົມມາແລ້ວລາວໄດ້ມາ ທົດລອງໃນເນື້ອທີ່ນາຂອງລາວເຫັນວ່າໄດ້ຮັບຜົນຜະລິດສູງຂຶ້ນ.

➢ **ຂໍ້ມູນເພີ່ມເຕີມຕິດຕໍ່:**

020 4117971 ນ. ເນາະ (ລູກສາວ)
ທ້າວ ໄມກົມ ບ. ຂວາງ ມ. ນາໝໍ້



ຊາວກະສິກອນດີເດັ່ນ



ການສັງເກດຕົ້ນເຂົ້າເພື່ອກຽມໄວ້ເປັນແນວພັນ



ຜົນຜະລິດເຂົ້ານາ
ທີ່ໄດ້ຕົກກ້າທັນລະດູການ

## ຫົວຂໍ້ທີ່ດີເດັ່ນ: ການລ້ຽງໝູ   ວິທີການທີ່ພົ້ນເດັ່ນ : ການສ້າງລະບຽບການຄຸ້ມຄອງການກັກຂັງສັດ (ໝູ)

### ➢ ປະຫວັດຫຍໍ້ຂອງຊາວກະສິກອນ:

ຊື່:ທ້າວ.ໄມແສງ    ອາຍຸ:39ປີ,
ຊົນເຜົ່າ:ລາວລຸ່ມ    ອາຊີບ: ເຮັດນາ
ເກີດຢູ່ບ້ານ: ນາທົ່ງ.

ໄລຍະຜ່ານມາແມ່ນຂະຫຍາຍພັນໝູຂາຍເຊິ່ງມີພໍ່ພັນໝູ1ໂຕ,ແມ່ພັນ3ໂຕ ສາມາດຜະລິດໝູນ້ອຍ: 30 -36ໂຕ/ປີ ມີລາຍຮັບ: 7ລ້ານ/ປີ, ເຊິ່ງເປັນຄອບຄົວທຳອິດຜະລິດໝູນ້ອຍຂາຍ, ແຮງງານຕົ້ນຕໍ 2ຄົນ,ສຳຮອງ 2ຄົນ.

ນອກຈາກການລ້ຽງໝູແລ້ວຍັງໄດ້ເຮັດນາລ້ຽງສັດໃຫຍ່, ສວນຢາງພາລາ ແລະ ຄ້າຂາຍ.

### ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ໃນເມື່ອກ່ອນພາຍໃນບ້ານມັກເກີດມີບັນຫາກ່ຽວກັບສັດລ້ຽງ ໂດຍສະເພາະໝູຂອງປະຊາຊົນ ແມ່ນປ່ອຍສະຊາຍພາຍໃນບ້ານ, ກິນຜົນຜະລິດ ແລະ ຕິດແປດເຊື້ອພະຍາດໄປສູ່ໝູຄອບຄົວອື່ນພ້ອມທັງມີການລັກໝູເກີດຂຶ້ນ.

ພາຍຫຼັງມີການສ້າງລະບຽບດັ່ງກ່າວທຸກໆຄອບຄົວກໍ່ໄດ້ມີການສ້າງຄອກໝູຂອງໃຜລາວ ເຊິ່ງເຮັດໃຫ້ຜົນຜະລິດບໍ່ເສຍຫາຍ,ບໍ່ປະກົດມີຄະດີດັ່ງກ່າວພ້ອມທັງບໍ່ມີການລະບາດຂອງພະຍາດ, ການສະກັດກັ້ນພະຍາດກໍ່ແມ່ນໄດ້ດີ.

### ➢ ການປະຕິບັດວິທີດັ່ງກ່າວ?

ອຳນາດການປົກບ້ານກໍ່ໄດ້ປະຊຸມຮ່ວມກັນແລະເຫັນດີຕ້ອງໄດ້ສ້າງກົດລະບຽບຂອງບ້ານຂຶ້ນ, ໂດຍແມ່ນບ້ານເອງເປັນຜູ້ສ້າງຂຶ້ນ ບົນພື້ນຖານຄວາມເຫັນດີຂອງປະຊາຊົນພາຍໃນບ້ານ ພາຍຫຼັງສ້າງສຳເລັດ ກໍ່ໄດ້ເປີດກອງປະຊຸມຂຶ້ນເຊິ່ງມີປະຊາຊົນໝົດບ້ານເຂົ້າຮ່ວມ.

ເພື່ອສະເໜີຜ່ານຮ່າງກົດລະບຽບພ້ອມທັງເອກກະພາບປະຊາຊົນໝົດບ້ານ.

ກົດລະບຽບ, ໝວດທີ:II ວ່າດ້ວຍຄົງເຂດເສດຖະກິດ (ມາດຕາທີ:2 ການຄຸ້ມຄອງສັດ)

- ທຸກຄອບຄົວທີ່ຈະລ້ຽງໝູຕ້ອງມີການສ້າງຄອກເພື່ອກັກຂັງສັດ ແລະ ສັກຢາປ້ອງກັນ.
- ຖ້າຄອບຄົວໃດ ຫາກປະປ່ອຍສັດສະຊາຍຈະຖືກກັກຂັງໝູໄວ້ ແລະ ປັບໃໝເຄິ່ງມູນຄ່າຂອງສັດຕໍ່1ຄັ້ງ/1ໂຕ (ບໍ່ໃຫ້ກາຍ24ຊົ່ວໂມງ) ຖ້າກາຍຈະຍຶດໝູໄວ້ເພື່ອຂາຍ ຫຼື ຮັບໃຊ້ກິດຈະກຳອື່ນຂອງບ້ານ. ໝາຍເຫດ: ສະບັບປັບປຸງແມ່ນປັບໃໝ 50.000ກີບ/ໂຕ/ຄັ້ງ.
- ມາດຕານີ້ແມ່ນມອບໃຫ້ ປກສ ບ້ານເປັນຜູ້ຄຸ້ມຄອງ ແລະ ດຳເນີນຕາມລະບຽບການດັ່ງກ່າວ.

### ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ກົດລະບຽບດັ່ງກ່າວແມ່ນເລີ້ມຕົ້ນຈາກກອງປະຊຸມເຜີຍແຜ່ລະບຽບ ກົດໝາຍຂອງປົກຄອງແຂວງ ແລະ ເມືອງໃນການຄຸ້ມຄອງຂັ້ນບ້ານ, ເຊິ່ງກຳນົດແຈ້ງວ່າອຳນາດການປົກຄອງບ້ານເອງຕ້ອງເປັນຜູ້ກຳນົດກົດລະບຽບຂອງບ້ານໃນການຄຸ້ມຄອງ ຂະແໜງການຕ່າງໆພາຍໃນບ້ານ.

ຫຼັງຈາກນັ້ນພະນັກງານກະສິກຳແຂວງ,ເມືອງໄດ້ລົງມາຊຸກຍູ້ແລະແນະນຳໃຫ້ບ້ານຕ້ອງໄດ້ມີການເຜີຍແຜ່ກ່ຽວກັບຄຸ້ມຄອງກັກຂັງສັດໃຫ້ເປັນລະບຽບ.

ດັ່ງນັ້ນ, ອຳນາດການປົກຄອງບ້ານ ເຫັນບັນຫາການກັກຂັງສັດ(ໝູ) ແລະມີຄະດີຄວາມເກີດຂຶ້ນຫຼາຍຈຶ່ງໄດ້ຮ່ວມກັນວາງກົດລະບຽບການຄຸ້ມຄອງສະບັບນີ້ຂຶ້ນ ເລີ້ມແຕ່ປີ2002ເປັນຕົ້ນມາ ແຕ່ມູນຄ່າ ແລະ ການປັບໃໝແມ່ນເລີ້ມປີ 2009

### ➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ.ໄມແສງ, ບ.ນາທົ່ງ, ມ. ນາໝໍ້



ທ.ໄມແສງ  ຊາວກະສິກອນດີເດັ່ນ



ທຸກໆຄອບຄົວຕ້ອງໄດ້ມີຄອກສັດ



ການສົ່ງຄືນໝູນ້ອຍພາຍຫຼັງປັບໃໝ

# ວິທີການທີ່ພົ້ນເດັ່ນ :

## ການຂຸດຄົ້ນແບບຍືນຍົງ (ການຄຸ້ມຄອງປ່າໜໍ່ຂົມ)

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ ຍືນ ອາຍຸ 36 ປີ, ບ້ານ ນ້ຳແພງ, ເມືອງ ນາໝໍ້, ແຂວງ ອຸດົມໄຊ. ລາວມີລູກ 3 ຄົນ ມີອາຊີບເປັນປະຊາຊົນ. ນາງ ຍືນ ຍັງເປັນສະມາຊິກສະຫະພັນແມ່ ຍິງບ້ານ ແລະ ເປັນສະມາຊິກ ຂອງກຸ່ມບ້ານອີກນຳ ລາວມີນາ 1 ບ່ອນ ເຊິ່ງໄດ້ໃຊ້ແນວພັນເຂົ້າປູກປະມານ 7 ກະໂລ່ງ, ນາດັ່ງກ່າວແມ່ນໄດ້ ຊື້ມາຈາກຄົນອື່ນ, ລູກຂອງລາວຜູ້ທີ່ນຶ່ງ ຮຽນຢູ່ໂຮງຮຽນມັດທະຍົມປາຍ, ເມືອງນາໝໍ້, ຜູ້ທີສອງຮຽນຢູ່ໂຮງ ຮຽນມັດທະຍົມຕົ້ນ ແລະ ຜູ້ທີສາມຮຽນຢູ່ໂຮງຮຽນປະຖົມ, ແຕ່ລາວເອງແມ່ນບໍ່ຮູ້ໜັງສື. **ນອກຈາກນັ້ນລາວຍັງມີລາຍໄດ້ຈາກການຫາໜໍ່ຂົມ 3ລ້ານກີບຕໍ່ປີ**

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນປະຈຸບັນບ້ານນ້ຳແພງ ແມ່ນໄດ້ມີການນຳໃຊ້ປ່າໜໍ່ຂົມເປັນບ່ອນທຳມາຫາກິນ ຂອງປະຊາຊົນພາຍໃນບ້ານ. ຊຶ່ງທາງອຳນາດ ການປົກຄອງບ້ານໄດ້ມີ ກົດລະບຽບກ່ຽວກັບການອະນຸລັກເຄື່ອງປ່າຂອງດົງ ໃຫ້ມີການນຳໃຊ້ໄດ້ ຢ່າງຍືນຍົງ ຄື: ປະຊາຊົນພາຍໃນບ້ານຫາໜໍ່ຂົມມາ ຕ້ອງໄດ້ເອົາມາຂາຍໃຫ້ກຸ່ມເກັບຊື້ ຂອງບ້ານທີ່ໄດ້ແຕ່ງຕັ້ງຮັບຊື້ ຕົວຢ່າງ: ຂາຍໜໍ່ໄມ້ຂົມໃຫ້ພໍ່ຄ້າ ຂ້າງນອກ 1 ກິໂລ 5,000 ກີບ ທາງກຸ່ມຈະໄດ້ປັບໃໝຜູ້ກ່ຽວ 10,000 ກີບຕໍ່ 1 ກິໂລ ພ້ອມທັງສຶກສາອົບຮົມ. ຖ້າຫາກວ່າເອົາຈົກເຂົ້າ ໄປຫາປ່າໜໍ່ຂົມຄັ້ງທີ່ນຶ່ງ ຈະຖືກສຶກສາອົບຮົມ, ຄັ້ງທີສອງປັບໃໝ, ຫາກມີການລະເມີດ ອີກຄັ້ງທີສາມ ຈະຕ້ອງເອົາມາດັດສ້າງແລ້ວ ບໍ່ໃຫ້ເຂົ້າໄປນຳໃຊ້ປ່າໜໍ່ໄມ້ຂົມອີກ ເຊິ່ງພາຍໃນບ້ານໄດ້ມີການຈັດຕັ້ງມີ: ຫົວໜ້າກຸ່ມບ້ານ, ໜ່ວຍເກັບຊື້, ໜ່ວຍກວດ ກາ ແລະ ມີໜ່ວຍເກັບເງິນ.

➢ **ການປະຕິບັດວິທີດັ່ງກ່າວ?**

ການເຂົ້າໄປຫາໜໍ່ຂົມທາງກຸ່ມບ້ານໄດ້ກຳນົດທຸກໆປີ ຂອງວັນທີ15 ເດືອນ 12 ແມ່ນເປັນມື້ເປີດປ່າ ແລະ ວັນທີ 30 ເດືອນ 3 ເປັນມື້ປິດປ່າໜໍ່ຂົມ. ວິທີການເຂົ້າຫາໜໍ່ຂົມທີ່ຖືຕ້ອງບໍ່ໃຫ້ດັບສູນ. ອຸປະກອນທີ່ໃຊ້ແມ່ນແວກ, ກ່ອນຈະທຳການຫາໜໍ່ໄມ້ຂົມຕ້ອງໄດ້ສັງເກດເຫັນໄມ້ໜໍ່ຂົມທີ່ຕາຍໃໝ່, ຄວາມຊຸ່ມຊື່ນ ຂອງດິນ ແລະດິນແຕກແຫງໜ້ອຍ ແລ້ວກໍໃຊ້ແວກຂຸດ ເມື່ອເຫັນມີແໜງອອກມາຈາກຮາກໃຫຍ່ແລ້ວ ຂຸດຕາມແໜງໄປຫາທາງເຫງົ້າທີ່ມີໜໍ່ ເຊິ່ງແຕ່ລະໜໍ່ຫ່າງກັນ 15-20 ຊມ, ໂດຍ ບໍ່ຕ້ອງໃຊ້ຈົກຂຸດ ເພາະວ່າຈະເຮັດໃຫ້ຮາກ ຂອງໜໍ່ໄມ້ຂົມຂາດ ແລະ ຕາຍ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງ ຍືນແມ່ນໄດ້ຮຽນຮູ້ກ່ຽວກັບການອະນຸລັກເຄື່ອງປ່າຂອງດົງ(ປ່າໜໍ່ໄມ້ຂົມ) ຈາກໂຄງການ ອະນຸລັກເຄື່ອງປ່າຂອງດົງແບບຍືນຍົງ (IUCN) ໂດຍແມ່ນ ທ້າວວັນໄວ ແລະ ທ້າວສີຄານ ເຊິ່ງແມ່ນພະນັກງານກະສິກຳປະຈຳຢູ່ ແຂວງອຸດົມໄຊເປັນຜູ້ນຳພາປະຕິບັດຕົວຈິງ ໂດຍການເຮັດທົດລອງເປັນດອນຕົວຢ່າງ ໃນການອະນຸລັກເຄື່ອງປ່າຂອງດົງ (ປ່າໜໍ່ໄມ້ຂົມ) ປະສົມປະສານກັບຄວາມຊົມເຄີຍ ຂອງລາວທີ່ໄດ້ເຮັດມາແຕ່ຍັງນ້ອຍນຳພໍ່ແມ່, ຫຼັງຈາກນັ້ນລາວກໍ່ໄດ້ ນຳໃຊ້ບົດຮຽນທີ່ໄດ້ຕົວຈິງຕະຫຼອດມາ.

➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ນ.ຍືນ, ບ.ນ້ຳແພງ, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ວິທີການຂຸດໜໍ່ໄມ້ຂົມ



ປ່າໜໍ່ໄມ້ຂົມ

# ວິທີການທີ່ພົ້ນເດັ່ນ :

## ການປຸງແຕ່ງອາຫານສຳລັບລ້ຽງໝູ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ້າວ.ໄຊຈິງ ອາຍຸ:36ປີ, ຊົນເຜົ່າ: ພູນ້ອຍ ຍ້າຍມາແຕ່: ຂ.ຜົ້ງສາລີ, ປີ1992 ບ້ານປະຈຸບັນ: ບ.ນາທີ່ງ,ມ.ນາໝໍ້,ຂ.ອຸດົມໄຊ ອາຊີບ: ລ້ຽງໝູ ແຮງງານ: ຕົ້ນຕໍ 2ຄົນ ແລະ ສຳຮອງ 1ຄົນ.

ເບື້ອງຕົ້ນຄອບຄົວແມ່ນເລີ່ມຕົ້ນຈາກການຊື້ໜອງປາ 2ໜອງແລະດິນສວນຈຳນວນໜຶ່ງ, ໄລຍະ2-3ປີທຳອິດແມ່ນລ້ຽງພຽງແຕ່ປາ(ແຕ່ກໍ່ບໍ່ມີກຳໄລຫຍັງ) ຕໍ່ມາຈຶ່ງໄດ້ກູ້ຢືມເງິນທະນາຄານສົ່ງເສີມມາຊື້ຄວາຍຮັບຈ້າງໄຖສວນສາລີ ພາຍຫຼັງມີທຶນກໍ່ໄດ້ສົ່ງຄືນທະນາຄານ ແລະ ຊື້ໝູເຂົ້າມາລ້ຽງໃນປີ2006 (ໝູຜູ້1ໂຕ,ແມ່2ໂຕ) ຕໍ່ມາຄອບຄົວຂອງລາວກໍ່ໄດ້ມີໝູຮອດ:32ໂຕ, ເຊິ່ງໃນປີໜຶ່ງສາມາດຂາຍໝູໄດ້ຢູ່ 2ຊຸດ ແລະ ມີລາຍຮັບໃຫ້ແກ່ຄອບຄົວປະມານ: 6-7ລ້ານກີບ/ປີ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໄລຍະລ້ຽງໝູທຳອິດກໍ່ລ້ຽງແບບທຳມະຊາດເພາະບໍ່ມີເວລາ, ມີວຽກຫຼາຍແລະມາສັງເກດໝູຂອງຕົນເອງກໍ່ແມ່ນຈ່ອຍ, ຂາຍບໍ່ໄດ້ລາຄາດີ (ລ້ຽງໝູຊີ້ນຂາຍ) ສະນັ້ນ ຖ້າຫາກເຮົາບໍ່ເອົາໃຈໃສ່ກ່ຽວກັບອາຫານໝູແມ່ນຈະຫຼຸບທຶນ.

➢ **ການປະຕິບັດວິທີດັ່ງກ່າວ?**

ສູດທີ1: ສຳລັບໝູນ້ອຍ (ຕັ້ງແຕ່ເກີດຈົນນ້ຳໜັກໝູໄດ້ປະມານ: 15-20ກິໂລ)

ສ່ວນປະສົມມີສາລີບົດ, ຜັກກະລ່ຳ, ຍອດມັນດ້າງ, ມັນຕົ້ນ ຫຼື ຖົ່ວເຫຼືອງ (ຊອຍປະສົມກັນກະວ່າພໍດີເກືອໝູອື່ມ) ແລ້ວເອົານ້ຳໃສ່ໃຫ້ພໍດີຖ້ວມ, ຕົ້ມປົນກັນໝົດສັງເກດພໍດີເປື່ອຍຈຶ່ງປົງປະໄວ້ໃຫ້ເຢັນ, ກ່ອນຈະເອົາໄປໃຫ້ໝູກິນແມ່ນປະສົມກັບເກືອ ແລະ ຫົວອາຫານເບີ39 (ຫົວອາຫານໝູຂອງຈີນ)ປະມານ:1/2 ຫຼື ເຄິ່ງກິໂລ

ການຕົ້ມຊ່ວຍໃຫ້ໝູນ້ອຍກິນໄດ້ດີ ບໍ່ມີແມ່ທ້ອງ ແລະ ໃຫ້ກິນ 3 ຄາບ/ມື້

ສູດທີ2: ສຳລັບໝູໃຫຍ່ (ຕັ້ງແຕ່ໝູ 15-20ກິໂລຂຶ້ນໄປຈົນຮອດຂາຍ)

- ເຄືອມັນດ້າງ: 3-4 ກິໂລ
- ສາລີບົດ: 6-7 ກິໂລ
- ຮຳອ່ອນ: 2 ກິໂລ
- ຫົວອາຫານເບີ38: 0,4 ກິໂລ
- ເກືອ: 3 ບ່ວງແກງ

ຄົນເຂົ້າກັນແລ້ວປະສົມນ້ຳພໍດີປັ້ນເປັນກ້ອນໄດ້, ອັດຕາໃຫ້ພໍດີກັບໝູອື່ມ

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ເບື້ອງຕົ້ນແມ່ນໄດ້ຈາກການໄປຢ້ຽມຢາມພີ່ນ້ອງຢູ່ຈີນ ແລະ ແລກປ່ຽນນຳເຂົາເຈົ້າແລ້ວກັບມາທົດລອງປຸງແຕ່ງອາຫານສຳລັບໝູທີ່ເຂົາເຈົ້າໄດ້ແນະນຳ ພາຍຫຼັງປະຕິບັດໝູລາວກໍ່ໃຫຍ່ໄວ, ຂາຍໄດ້ລາຄາດີ (ມີກຳໄລຫຼາຍ).

➢ ຕິດຕໍ່ຂໍ້ມູນເພີ່ມເຕີມ: **2376583**
ທ.ໄຊຈິງ, ບ້ານ.ນາທີ່ງ, ເມືອງ.ນາໝໍ້ ແຂວງ.ອຸດົມໄຊ



ຊາວກະສິກອນດີເດັ່ນ



ການປະສົມອາຫານສຳລັບໝູໃຫຍ່



ເຄື່ອງບົດສາລີ, ມັນຕົ້ນແຫ້ງ



ນຳໃຊ້ສູດທີ2. ໝູນ້ຳໜັກ 15ກິໂລ

# ວິທີການທີ່ພົ້ນເດັ່ນ :

## ການໃຫ້ອາຫານໝູຢ່າງພຽງພໍ. ໝູໃຫຍ່ໄວ

### ➢ ປະຫວັດຫຍໍ້ຂອງຊາວກະສິກອນ:

ຊື່:ທ້າວ.ສີທົນ ອາຍຸ: 38 ປີ,ຊົນເຜົ່າ: ລາວ ລຸ່ມ ອາຊີບ: ຊາວກະສິກອນ ເກີດຢູ່ບ້ານ: ນ້ຳກໍ້. ເມືອງນາໝໍ້, ແຂວງ ອຸດົມໄຊ, ມີສະມາຊິກຄອບຄົວ ທັງ 10 ຄົນ ແຮງງານຕົ້ນຕໍ 2 ຄົນ. ຍ້ອນຄວາມດຸໝັ່ນຂະຫຍັນພຽນ ເຮັດໃຫ້ລາວສົນໃຈການລ້ຽງໝູເພື່ອເປັນເສດຖະກິດຄອບຄົວ,

### ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ຕໍ່ມາໄລຍະໜຶ່ງລາວໄດ້ພະຍາຍາມປັບປຸງວິທີການລ້ຽງໃຫ້ດີຂື້ນກ່ວາເກົ່າໂດຍເຫັນເພື່ອນບ້ານໃກ້ຄຽງລ້ຽງແບບເຮັດຖືກຕ້ອງຕາມເຕັກນິກເຊິ່ງໄດ້ຮັບຄຳແນະນຳຈາກເຈົ້າຂອງຟາມທີ່ຂາຍໝູໃຫ້ ເຊິ່ງເປັນຟາມລ້ຽງໝູຂອງເອກະຊົນແຫ່ງໜຶ່ງໃກ້ກັບຕົວເມືອງຈຶ່ງໄດ້ປຶກສາກັບຄອບຄົວ ແລະ ຕັດສິນໃຈຊື້ໝູພັນເຂົ້າລ້ຽງ,ພ້ອມທັງສຶກສາຄຳແນະນຳຈາກເຈົ້າຂອງຟາມດັ່ງກ່າວ ຜ່ານການລົງມືປະຕິບັດຕົວຈິງໃນໄລຍະ 5 ປີ ຜ່ານມາການລ້ຽງໝູລາດຂອງລາວເຫັນວ່າໝູໃຫຍ່ຊ້າ, ສິ້ນເປືອງອາຫານຫຼາຍໃຊ້ຕົ້ນທຶນສູງເມື່ອສົມທຽບກັບການລົງທຶນ ແລະ ຜົນກຳໄລແມ່ນຍັງບໍ່ທັນເປັນສິ່ງທີ່ໜ້າພໍໃຈຍ້ອນການລ້ຽງແບບເອື່ອຍອີງທຳມະຊາດຂາດເຕັກນິກໃນການລ້ຽງ.

### ➢ ການປະຕິບັດວິທີດັ່ງກ່າວ?

ວິທີການລ້ຽງແມ່ນເຮັດຕາມຂັ້ນຕອນແນະນຳຄື:

1. ການປະສົມອາຫານແມ່ນໃນອັດຕາ: ຮຳ 20 ກິໂລ/ຫົວອາຫານ 5 ກິໂລ ເກືອ 2ຄັ້ງ/ມື້ (ສຳລັບໝູ 14ໂຕ).
2. ບໍ່ເອົາຫົວອາຫານເສດເຫຼືອຕ່າງໆໃຫ້ໝູກິນເພາະຈະເຮັດໃຫ້ໝູເຈັບທ້ອງ
3. ໝັ່ນກວດກາ ຫຼື ສັງເກດເບິ່ງການກິນຂອງໝູເພື່ອກັນບໍ່ໃຫ້ເກີດພະຍາດ
4. ໝັ່ນເອົານ້ຳໃຫ້ກິນ ແລະ ອາບນ້ຳໃຫ້ໂດຍສະເພາະຍາມຮ້ອນ ຖ້າປະຕິບັດໄດ້ຄືແນວນີ້ກໍ່ຈະເຮັດໃຫ້ໝູແຂງແຮງໃຫຍ່ໄວ.

ພາຍຫຼັງການ ລ້ຽງໝູຂອງລາວໄລຍະ 3 ເດືອນເຫັນວ່ານ້ຳໜັກຂອງໝູເພີ່ມຂື້ນຈາກ 10ກິໂລ/ໂຕ ເປັນ 35 ກິໂລ/ໂຕ ແລະ ໝູອາຍຸໄດ້ 6ເດືອນກໍ່ສາມາດຂາຍໄດ້.

### ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ການໃຫ້ອາຫານໝູຢ່າງພໍພຽງ ແມ່ນໄດ້ຂໍຄຳແນະນຳຈາກວິຊາການຟາມຈີນ

### ➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ.ສີທົນ, ບ.ນ້ຳກໍ້, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ການໃຫ້ອາຫານໝູ



ການກິນອາຫານຂອງໝູ

# ວິທີການທີ່ພົ້ນເດັ່ນ :

## ການໃສ່ຝຸ່ນຄອກ ແລະ ຝຸ່ນຂຽວໃນນາເຂົ້າ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ້າວ ຊາຍສະໝອນ ດວງມາໄລ ອາຍຸ 40 ປີ ເປັນຊາວບ້ານນາສະຫວ່າງ ເມືອງນາໝໍ້, ແຂວງອຸດົມໄຊ. ສະມາຊິກໃນຄອບຄົວຂອງລາວມີທັງໝົດ 6 ຄົນ,ແຮງງານຕົ້ນຕໍ 2 ຄົນ. ມີອາຊີບເປັນຊາວກະສິກອນ.ມີເນື້ອທີ່ນາທັງໝົດ 3 ເຮັກຕາ ເຊິ່ງເປັນ ມູນສືບທອດມາຈາກພໍ່ແມ່. ໃນໄລຍະຜ່ານມາລາວເຄີຍເປັນເລຂາຊາວ ໜຸ່ມບ້ານມາຮອດປະຈຸບັນລາວ ແລະ ຍັງເປັນວິຊາການຂອງການປູກຢາສູບໃຫ້ ແກ່ບໍລິສັດຫຼຽນຫຼີງ ເຊິ່ງເປັນ ບໍລິສັດຂອງຈີນມາລົງທືນ .

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຍັງ?**

ການເຮັດນາໃນປະຈຸບັນມີການໃຊ້ຝຸ່ນວິທະຍາສາດຫຼາຍເຮັດໃຫ້ຕົ້ນທຶນການຜະລິດສູງສີ້ນເປືອງງົບປະມານໃນການໃຊ້ຈ່າຍນອກຈາກນັ້ນຍັງເຮັດໃຫ້ດິນເຊື່ອມຄຸນນະພາບ ແຕ່ການໃຊ້ຝຸ່ນຄອກ ແລະ ຝຸ່ນຂຽວໃນນາເຂົ້າເຮັດໃຫ້ພື້ນທີ່ນາທີ່ເຊື່ອມຄຸນນະພາບຟື້ນຟູກັບຄືນມາໄດ້ເຮັດໃຫ້ດິນມີຄວາມອຸດົມສົມບູນສາມາດຍົກສູງສະມັດຕະພາບຂອງຜົນຜະລິດໄດ້, ທັງເປັນການຫຼຸດຜ່ອນຕົ້ນທຶນການຜະລິດອີກດ້ວຍ.

➢ **ການປະຕິບັດວິທີດັ່ງກ່າວ?**

- ນຳເອົາວັດຖຸທີ່ມີໃນທ້ອງຖິ່ນ ເຊັ່ນ: ຝຸ່ນຄອກການນຳໃຊ້ແມ່ນຕັກຝຸ່ນຄອກໃສ່ເປົາແລ້ວນຳໄປຖອກໃສ່ກ້ອງຄັນນາເປັນກອງໄລຍະຫ່າງຈາກຄັນນາ 1 ແມັດ ແລະ ມີໄລ ຍະຫ່າງລະຫວ່າງກອງ 1,5 ແມັດ ຫຼັງຈາກນັ້ນລາວໄດ້ໄຖປົກປະ ໄວ້1 ອາທິດແລ້ວຈິ່ງ ລົງມືຄາດ ເຮັດໃຫ້ຝຸ່ນຄອກກະຈາຍທົ່ວໃຮ່ນາຕາມຄວາມຕ້ອງການແລ້ວຈິ່ງປັກດຳ.

- ຝຸ່ນຂຽວເຮັດດ້ວຍສອງວິທີຄື:

1. ໄດ້ ນຳເອົາລຳຕົ້ນ ແລະ ຍອດຂອງຕົ້ນຢາສູບຟັກເປັນທ່ອນໆຖີ້ມລົງໃສ່ນາ ຫຼັງຈາກນັ້ນຈຶ່ງໄຖປົກປະໄວ້ຈົນກວ່າກ້ານຢາ ແລະ ຍອດຕົ້ນຢາສູບເນົ່າເປື່ອຍເປັນຝຸ່ນແລ້ວຈຶ່ງໄຖປົ້ນຄືນອີກຄັ້ງໜຶ່ງ

2. ໄດ້ກະກຽມຂຸມທີ່ມີຂະໜາດ1,5x1,5x1,5 ແມັດ ຫຼັງຈາກນັ້ນກໍ່ນຳເອົາເສດພືດ (ຫຍ້າຂີ້ລໍ້) ມາໃສ່ຂຸມ ແລ້ວຢຽບໃຫ້ແໜ້ນ ຈາກນັ້ນນຳເອົານ້ຳຖອກໃສ່ໃຫ້ພຽງກັບຫຍ້າປະໄວ້ 15 ວັນກໍ່ສາມາດນຳເອົານ້ຳໄປໃຊ້ໄດ້ເລີຍ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ໄດ້ຮັບການແນະນຳ ຈາກວິຊາການຫ້ອງການກະສິກຳ ແລະ ປ່າໄມ້ ເມືອງນາໝໍ້ ເລື່ອງການນຳໃຊ້ຝຸ່ນຄອກແລະຝຸ່ນຂຽວເຂົ້າໃສ່ນາ. ນອກຈາກນັ້ນລາວຍັງໄດ້ໄປແລກປ່ຽນບົດຮຽນນຳພີ່ນ້ອງຢູ່ ເມືອງແກ່ນທ້າວ ແຂວງໄຊຍະບູລີ ແລະໄດ້ນຳເອົາບົດຮຽນດັ່ງກ່າວມານຳໃຊ້ຈົນຮອດປັດຈຸບັນ

➢ **ຂໍ້ມູນເພີ່ມເຕີມຕິດຕໍ່:**

020 6840902

ທ. ຊາຍສະໝອນ ມ. ນາໝໍ້

ແຂວງ ອຸດົມໄຊ



ຊາວກະສິກອນດີເດັ່ນ



ການກະກຽມຝຸ່ນຄອກໄວ້ໃສ່ນາ



ການເຮັດຝຸ່ນຂຽວໄວ້ສຳລັບໃສ່ນາ

# ວິທີການທີ່ພົ້ນເດັ່ນ :

## ການສັກຢາປ້ອງກັນໝູ

### ➢ ປະຫວັດຫຍໍ້ຂອງຊາວກະສິກອນ:

ທ້າວ.ກັນຍາ ອາຍຸ 38 ປີ ອາຊີບເປັນຊາວກະສິກອນ ບ້ານຂວາງ ເມືອງນາໝໍ້ ແຂວງ ອຸດົມໄຊ ປະຈຸບັນລາວມີໜ້າທີ່ຮັບຜິດຊອບກ່ຽວກັບສັດຕະວະແພດບ້ານ ຄອບຄົວມີ 6 ຄົນ, ແຮງງານຕົ້ນຕໍ 2 ຄົນ. ໃນເມື່ອກ່ອນຄອບຄົວຂອງລາວມີອາຊີບໃນການເຮັດນາ, ເຮັດສວນເປັນຫຼັກ ແລະຖືເອົາການລ້ຽງສັດເປັນອາຊີບສຳຮອງ ແຕ່ກ່ອນການລ້ຽງໝູຂອງລາວຍັງອາໃສການລ້ຽງແບບທຳມະຊາດ ບໍ່ໄດ້ຮັບການສັກຢາປ້ອງກັນຈຶ່ງເຮັດໃຫ້ໝູມີຄວາມສ່ຽງໃນການຕິດເຊື້ອພະຍາດເລື້ອຍໆເຮັດໃຫ້ການລ້ຽງໝູຂອງລາວບໍ່ໄດ້ຮັບຜົນເທົ່າທີ່ຄວນ.

### ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ການລ້ຽງໝູຜ່ານມາຍັງລ້ຽງແບບທຳມະຊາດຂາດເຕັກນິກ, ເຮັດໃຫ້ໝູບໍ່ຂະຫຍາຍຕົວເທົ່າທີ່ຄວນ. ດັ່ງນັ້ນການນຳໃຊ້ເຕັກນິກເຂົ້າຊ່ວຍໃນການລ້ຽງໝູໂດຍສະເພາະແມ່ນວິທີການສັກຢາປ້ອງກັນໄດ້ເຮັດໃຫ້ຄອບຄົວຂອງລາວສາມາດຫຼຸດຜ່ອນຄວາມສ່ຽງໃນການຕິດພະຍາດ ແລະ ຕາຍ.

### ➢ ການປະຕິບັດວິທີດັ່ງກ່າວ?

ວິທີການດັ່ງກ່າວມີຂັ້ນຕອນປະຕິບັດດັ່ງນີ້:

1. ກ່ອນຈະເອົາໝູເຂົ້າມາລ້ຽງໃໝ່ຕ້ອງໄດ້ໃຫ້ອາຫານປົນກັບຢາໄອໂບເມັກຂ້າແມ່ທ້ອງສາກ່ອນ.
2. **ສັກຢາປ້ອງກັນອະຫິວາໝູແມ່ນສັກໃນຊ່ວງ**
3. ໃນເບື້ອງຕົ້ນລາວ ທົດລອງສັກຢາປ້ອງກັນພະຍາດອະຫິວາໝູທີ່ສາມາດຄຸ້ມກັນໄດ້ 3 ເດືອນ ແລະ 6 ເດືອນເມື່ອສຶກສາຜົນໄດ້ຮັບໝູຂອງລາວແຂງແຮງດີດັ່ງນັ້ນລາວຈຶ່ງໄດ້ນຳໃຊ້ວິທີ ດັ່ງກ່າວກັບສັດລ້ຽງຂອງລາວຕັ້ງປີ 2008 ຈົນເຖິງປະຈຸບັນ

### ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ທ້າວ ກັນຍາໄດ້ຮຽນຮູ້ວິທີການສັກຢາປ້ອງກັນ ແລະ ປິ່ນປົວໝູຈາກການຝຶກອົບຮົມນຳວິຊາການຂອງຫ້ອງກະສິກຳ ແລະ ປ່າໄມ້ ເມືອງນາໝໍ້ ໃນປີ 2008 (14 ວັນ) ພາຍຫຼັງທີ່ໄດ້ຜ່ານການຝຶກອົບຮົມລາວໄດ້ນຳໃຊ້ວິທີການທີ່ໄດ້ຮຽນມາທົດລອງນຳໃຊ້ກັບໝູຂອງລາວ, ວິທີການໜຶ່ງທີ່ລາວຍອມຮັບແມ່ນການສັກຢາປ້ອງກັນເຂົ້າໃນການລ້ຽງໝູ.

### ➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ.ກັນຍາ, ບ.ຂວາງ, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ໝູຂອງທ້າວກັນຍາ



ຢາປ້ອງກັນພະຍາດໝູ

# ວິທີການທີ່ພົ້ນເດັ່ນ :

## ການກໍາຈັດຕັກກະແຕນ (ການປູກເຂົ້ານາປີ)

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ້າວໄຊຕິວ ອາຍຸ 43 ປີ ຊົນເຜົ່າມົ້ງ ອາຊີບຊາວນາເກີດຢູ່ບ້ານນາແສ, ເມືອງນໍ້າທາ, ແຂວງຫຼວງນໍ້າທາ ແລະ ລາວໄດ້ຍ້າຍມາຢູ່ບ້ານຫວ້ຍຊາງ, ເມືອງນາໝໍ້, ແຂວງ ອຸດົມໄຊໃນປີ 1994 ສະມາຊິກຄອບຄົວຂອງລາວມີ 11 ຄົນລູກຍິງ 4 ຄົນ. ລາວມີເນື້ອນາທີ່ທໍາການຜະລິດ 2 ເຮັກຕາ,ຜົນຜະລິດ ເຂົ້ານາ 4-5 ໂຕນ,ໄຮ່ປູກເຂົ້າ2-3ເຮັກຕາໄດ້ຜົນຜະລິດ1-2ໂຕນນອກຈາກນັ້ນຍັງລ້ຽງໝູ,ລ້ຽງສັດປີກ ແລະ ລ້ຽງປາຈໍານວນ2ໜອງອີກ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຍັງ?**

ໃນສະພາບຜ່ານມາຊາວກະສິກອນ ພາຍໃນບ້ານຫ້ວຍຊາງຍັງບໍ່ຮູ້ນໍາໃຊ້ຢາ ດີຊລໍວໍສ 80 ອີຊີ (Dichlovos 80 EC) ມາກໍາຈັດແມງຕັກກະແຕນ ທີ່ເກີດ ຂື້ນ ຢູ່ໃນຕົ້ນກ້າ ໃນຊ່ວງທີ່ຕົ້ນກ້າເກີດຂື້ນໄດ້ປະມານ ຄືບໜຶ່ງ ຫຼື 20 ຊັງຕີ. ນັບແຕ່ປີ 2006 ມາຮອດປັດຈຸບັນນີ້ ທ່ານ ໄຊຕິວ ໄດ້ນໍາເອົາຢາ ແລະ ວິທີການນໍາໃຊ້ ສາມາດສະແດງໃຫ້ເຫັນວ່າ ຜົນຂອງການນໍາໃຊ້ຢາກໍາຈັດແມງຕັກກະແຕນ ໄດ້ຮັບຜົນດີ, ຜົນຜະລິດກໍ່ໄດ້ເພີ່ມຂື້ນ ເຮັດໃຫ້ປະຊາຊົນພາຍໃນບ້ານໄດ້ມີການ ຍອມຮັບໃນ ການນໍາໃຊ້ຢາຢ່າງຫຼວງຫຼາຍ.

➢ **ການປະຕິບັດວິທີດັ່ງກ່າວ?**

<u>ໄລຍະທີ່1:</u>

- ກຽມກວດຢາກໍາຈັດແມງຕັກກະແຕນ ດີຊລໍວໍສ (Dichlovos80EC) ໄວ້,
- ໃຫ້ຕົ້ນກ້າຂື້ນສູງ ໄດ້ປະມານ1 ຄືບ ຫຼື 20 ຊມ.
- ກ່ອນຈະປະສົມຢາ ແລະນໍ້າຕ້ອງເອົາແພອັດປາກໃຫ້ດີ,
- ຕັກນໍ້າໃສ່ບັ້ງສີດຢາ ສີດທີ່ມີປະລິມານ 15 ລິດ ຫຼັງຈາກນັ້ນ ຖອດໃສ່ຝາ ຂອງກວດຢານັ້ນ 1ຝາແລ້ວນໍາມາປະສົມກັບນໍ້າ ໃນບັ້ງສີດແລ້ວເອົາໄມ້ຄົນໃຫ້ເຂົ້າກັນລະອຽດ,
- ຕ້ອງສີດໃນເວລາບໍ່ມີລົມແຮງ, ບໍ່ມີ ຝົນຕົກ ແລະ ໃນຕອນເຊົ້າ

<u>ໄລຍະທີ່ 2:</u>

- ໃນເວລາປັກດໍາໄດ້ 1 ເດືອນແລ້ວຕ້ອງໄດ້ປະຕິບັດຕາມໄລຍະທີ່ໜຶ່ງ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ທ້າວໄຊຕິວໄດ້ຮຽນຮູ້ນໍາໃຊ້ຢາຊະນິດນີ້ ໂດຍຄໍາແນະນໍາ ຂອງທ້າວຊ້າງຢູ່ບ້ານ ນາຫານ ເມືອງ ນາໝໍ້ ແຂວງ ອຸດົມ ໄຊ. ກ່ຽວກັບການກໍາຈັດຕັກກະແຕນ ໂດຍ ວິທີການໃຊ້ຢາກໍາ ຈັດ ດີຊລໍວໍສ 80 ອີຊີ (Dichlovos80EC). ລາວເວົ້າວ່າ ໃຊ້ຢາ ຊະນິດນີ້ ແມ່ນໄດ້ຮັບຜົນດີ ທ້າວໄຊຕິວໄດ້ຍິນແນວນັ້ນ ລາວເລີຍນໍາໄປໃຊ້ໃນນາ ເຂົ້າກໍາຈັດຕັກ ແຕນ ແລະ ຍັງເຮັດໃຫ້ໄດ້ຮັບຜົນຜະລິດເພີ່ມຂື້ນ. ດັ່ງນັ້ນຈຶ່ງໄດ້ນໍາໃຊ້ມາເຖິງປະຈຸບັນ,

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ທ.ໄຊຕິວ, ບ.ຫ້ວຍຊາງ, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ຊະນິດຕັກກະແຕນ



ຊະນິດຢາ ດີຊລໍວໍສ80ອີຊີ

# ວິທີການທີ່ພົ້ນເດັ່ນ :

## ການກຳຈັດໜູໃນນາເຂົ້າ (ການປູກເຂົ້ານາປີ)

- **ປະຫວັດຫຍໍ້ຂອງຊາວກະສິກອນ:**

**ທ້າວ ເປີນ ອາຍຸ 50 ປີ ແມ່ນຊາວ ບ້ານນາໂຮມ, ກຸ່ມບ້ານປາງທອງ ເມືອງນາໝໍ້, ລາວມີລູກ 3 ຄົນ, ຍິງ 2 ຄົນ, ມີແຮງງານຕົ້ນຕໍ 2 ແຮງງານ ສ່ວນລູກ ສາວ 2 ຄົນໄດ້ສ້າງຄອບຄົວອອກເຮືອນແລ້ວ ແລະ ລູກຊາຍ ເປັນເຈົ້າໜ້າທີ່ຕຳຫຼວດຢູ່ທີ່ເມືອງໄຊ. ອາຊີບ ຂອງທ້າວເປີນແມ່ນ ຊາວກະສິກອນ (ເຮັດໄຮ່ປູກເຂົ້າ,ສວນສາລີ, ຢາງພາລາ). ລາວຍັງເປັນຄົນດຸໝັ່ນ ແລະ ມີຫົວ ຄິດປະດິດສ້າງໃນການ ເຮັດແມນ ເພື່ອກຳຈັດໜູໃນ**ໄຮ່ເຂົ້າ ແລະ ນາເຂົ້າ.

- **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ຜ່ານມາ ທ້າວ ເປີນ ໄດ້ປູກພືດຫຼາຍຊະນິດໃນໄຮ່ນາ ຜົນຜະລິດເຫຼົ່ານັ້ນຖືກທຳລາຍຢ່າງຮ້າຍແຮງ ຈາກໜູ ເນື່ອງຈາກລາວຍັງບໍ່ທັນຮູ້ວິທີການສ້າງ ແລະ ນຳໃຊ້ແມນ(ແຮ້ວ) ແຕ່ມາຮອດປັດຈຸ ບັນ ລາວຈຶ່ງມີຄວາມຄິດວິທີການ ສ້າງແມນແບບເດີມ ເພື່ອຊ່ວຍໃນການກຳ ຈັດ ໜູ ທຸກຊະນິດ ທີ່ມັກທຳລາຍຜົນຜະລິດ. ໃນເມື່ອລາວໄດ້ ເລີ່ມໃຊ້ແມນນີ້ມາ ກຳຈັດໜູແລ້ວ ເຮັດໃຫ້ຫຼຸດຜ່ອນການທຳ ລາຍ, ຕົວຢ່າງ: ຈຳນວນ ແມນ 50 ຄັນ ສາມາດໄດ້ໜູ 20-30 ໂຕຕໍ່ຄືນ ຖ້າຫາກວ່າໃສ່ແລ້ວ ຢາມກັບໄປກັບມາເຖິງ 3-4 ເທື່ອ ຈະໄດ້ໜູເຖິງ 50-60 ໂຕ.
ຕໍ່ຄືນ.

- **ການປະຕິບັດວິທີດັ່ງກ່າວ?**

ການປະຕິບັດດັ່ງກາວມີຂັ້ນຕອນດັ່ງລຸ່ມນີ້:

1. ການສັງເກດເບິ່ງເສັ້ນທາງໜູຫຼຽວໄປມາ
2. ຕ້ອງໃສ່ໃນເວລາ 4-5 ໂມງແລງ, ໃນຊ່ວງເດືອນມືດ ຖ້າຫາກໃສ່ໃນຊ່ວງເດືອນ ແຈ້ງ ໜູຈະເຫັນແມນ.
3. ຖ້າຫາກມີຫ້ວຍນ້ຳ ໜູຂ້າມບໍ່ໄດ້ຈະຕ້ອງໄດ້ຕັດໄມ້ມາກ່າຍເປັນຂົວ ຈາກນັ້ນປະໄວ້ປະ ມານ 1 ຫາ 2 ເດືອນສາມາດໄປໃສ່ແມນໄດ້ ໃນຊ່ວງນັ້ນຈະຖືກດີ.

- **ວິທີການດັ່ງກ່າວໄດ້ມາຈາກໃສ?**

ທ້າວ ເປີນ ໄດ້ຄວາມຮູ້ໃນການເຮັດແມນມາຈາກພໍ່ຂອງລາວ ທີ່ເຄີຍເຮັດໃນ ຕອນອາຍຸຂອງລາວໄດ້ 15 ຫາ 16 ປີ. ໃນການສ້າງ ແມນເປັນເລື່ອງງ່າຍແລ້ວລາວຍັງເຮັດວິທີການກຳຈັດໜູ ມາຮອດປັດຈຸບັນນີ້.

- **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ທ.ເປີນ, ບ.ນາໂຮມ, ມ. ນາໝໍ້



ຊາວກະສິກອນດີເດັ່ນ




ວິທີການສາທິດໃສ່ແມນ



ວິທີໃສ່ແມນເທິງໜ້າດິນຕາມທາງໜູ



ວິທີການໃສ່ແມນ ເທິງຂອນໄມ້

# ວິທີການທີ່ພົ້ນເດັ່ນ :

## ການຄັດເລືອກແນວພັນເຂົ້ານາ (ການປູກເຂົ້ານາປີ)

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ້າວ ແປະ ອາຍຸ 48 ປີໃນປະຈຸບັນເປັນປະທານບ້ານ. ລາວເກີດຢູ່ບ້ານຫວ້ຍຊາງ ເມືອງນາໝໍ້ ໃນປີ2001 ທ່ານ ແປະ ຍ້າຍຢູບ້ານປາງດູ່ເມືອງນາໝໍ້ແຂວງອຸດົມໄຊ ລາວມີລູກ 5 ຄົນ ຍິງ3ຄົນ. ອາຊີບເປັນຊາວກະສິກອນ ເມຍຂອງລາວກໍ່ເປັນຊາວກະສິກອນເຊັ່ນດຽວກັນ ພາຍໃນຄອບຄົວມີແຮງງານຕົ້ນຕໍ ໃນການຜະລິດກະສິກໍາ 4 ແຮງງານ, ມີເນື້ອທີ່ນາ 1 ເຮັກຕາ ໄດ້ຜົນຜະລິດ 3 ໂຕນຕໍ່ປີ,ນອກຈາກນັ້ນ ທ້າວ ແປະ ຍັງມີ ສວນຢາງພາລາ ແລະ ສວນໄມ້ໃຫ້ໝາກ ອີກຈໍານວນໜຶ່ງ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ຜ່ານມາ ທ້າວ ແປະຍັງປູກແນວພັນເຂົ້ານາດັ່ງເດີມເຮັດໃຫ້ພົບບັນຫາຫຼາຍຢ່າງ ແລະ ຜົນຜະລິດຕໍ່າເຊັ່ນ: ເນື້ອທີ່ນາ 1 ເຮັກຕາໄດ້ຜົນຜະລິດ 1-2 ໂຕນ ຈຶ່ງເຮັດໃຫ້ຄອບຄົວຂອງລາວຂາດເຂົ້າກິນໃນແຕ່ລະປີ, ປີ 2007 ເຖິງປະຈຸບັນ ທ້າວ ແປະ ໄດ້ນໍາເອົາແນວພັນເຂົ້າງາຊ້າງ ມາປູກສາມາດໃຫ້ຜົນຜະລິດສູງເຖິງ 4-5 ໂຕນຕໍ່ເຮັກຕາເນື່ອງຈາກ ທ້າວ ແປະ ໄດ້ມີວິທີການ ຄັດເລືອກແນວພັນເຂົ້າງາຊ້າງ.

➢ **ການປະຕິບັດວິທີດັ່ງກ່າວ**

ວິທີການຄັດເລືອກປະຕິບັດຕາມຂັ້ນຕອນດັ່ງນີ້:

- ຕ້ອງຄັດເລືອກໃນຊ່ວງເກັບກ່ຽວຜົນຜະລິດເຂົ້າ
- ຕ້ອງສັງເກດຕົ້ນເຂົ້າທີ່ບໍ່ສູງ ແລະ ບໍ່ຕໍ່າເກີນໄປ
- ຖ້າຕົ້ນທີ່ຢູ່ໃນສຸມດຽວກັນສູງເກີນໄປ ຈະຕ້ອງເດັດຖິ້ມ ເພາະວ່າຕົ້ນນັ້ນຈະເປັນ ຕົ້ນເຂົ້າທີ່ກາຍພັນ,
- ຖ້າຕົ້ນທີ່ຕໍ່າກວ່າປົກກະຕິ ເມັດຈະອ່ອນແອເຮັດໃຫ້ການແຕກງອກບໍ່ດີ ແລະ ບໍ່ແຂງແຮງ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ທ້າວແປະໄດ້ຮັບຮູກ່ຽວກັບແນວພັນເຂົ້າງາຊ້າງມາຈາກພີ່ນ້ອງ ບ້ານນາຂາມ ເມືອງນາໝໍ້ ແຂວງອຸດົມໄຊ. ລາວໄດ້ເຫັນພີ່ນ້ອງປູກ ແລະໄດ້ຮັບຜົນຜະລິດສູງ ສະນັ້ນ ລາວຈຶ່ງນໍາເອົາແນວພັນເຂົ້າດັ່ງກ່າວມາປູກຢູ່ໃນເນື້ອນານັບແຕ່ປີ 2007 ຈົນມາເຖິງປະຈຸບັນນີ້.

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ທ.ແປະ, ບ.ປາງດູ່, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ແນວພັນເຂົ້າງາຊ້າງ



ການສໍາພາດ

# ວິທີການທີ່ພົ້ນເດັ່ນ :

## ການຄຸ້ມຄອງການຖາງປ່າໜໍ່ຂົມ (ການອານຸລັກປ່າໜໍ່ຂົມ)

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ່ານເຍ່ຍລີມົວ ອາຍຸ 39 ປີແມ່ນຊາວກະສິກອນ ບ້ານປາງທອງ ເມືອງນາໝໍ້ ແຂວງ ອຸດົມໄຊ. ລາວມີລູກ10 ຄົນຮຽນຈົບໂຮງຮຽນວິຊາສະເພາະ1ຄົນ ແລະ ຮຽນມັດທະຍົມຕອນຕົ້ນ1ຄົນສ່ວນ 8 ຄົນຍັງເຂົ້າໂຮງຮຽນປະຖົມ ທ່ານເຍ່ຍລີມົວເກີດຢູ່ບ້ານພູຕອງ ຕາແສງຕົນສານ ເມືອງນໍ້າທາ ແຂວງຫຼວງນໍ້າທາ ໃນປີ 1992 ໄດ້ຍ້າຍມາຢູ່ບ້ານປາງທອງ, ເມືອງນາໝໍ້, ແຂວງອຸດົມໄຊ ມາຮອດປະຈຸບັນ ລາວປູກຢາງພາລາ ແລະ ລ້ຽງສັດ ໃນໄລຍະທີ່ຜ່ານມາລາວເປັນກອງຫຼອນບ້ານ ແຕ່ມາຮອດປີ 2008-2009 ໄດ້ຖືກແຕ່ງຕັ້ງເປັນນາຍບ້ານ, ເມຍຂອງລາວຊື່ ນ. ເຢັງ ອາຍຸ 38 ປີ ເປັນຊາວກະສິກອນ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນປະຈຸບັນປະຊາຊົນ ບ້ານປາງທອງ ຍັງມີບາງຄອບຄົວທີ່ຢາກຈະບຸກລຸກຖາງປ່າໜໍ່ຂົມ ເພື່ອເຮັດໄຮ່ປູກເຂົ້າ ທ່ານ ເຍ່ຍລີມົວ ກໍ່ໄດ້ນຳເອົາລະບຽບການ ຄຸ້ມຄອງ ການຖາງປ່າໜໍ່ຂົມ ມາຈັດຕັ້ງປະຕິບັດ ໂດຍການແຕ່ງຕັ້ງຄະນະຮັບຜິດຊອບການຄຸ້ມຄອງ ແລະ ແຕ່ງຕັ້ງຄະນະກວດກາ ເພື່ອເຮັດໃຫ້ຊາວກະສິກອນຢຸດຕິການຖາງປ່າໜໍ່ຂົມຢ່າງສິ້ນເຊີງ.

➢ **ການປະຕິບັດວິທີດັ່ງກ່າວ?**

ຖ້າຫາກຜູ້ໃດລະເມີດຖາງປ່າ ແລະ ຕັດໄມ້ໃນເຂດປ່າໜໍ່ຂົມທີ່ຫວງຫ້າມຈະຕ້ອງ ໄດ້ປະຕິບັດຄືດັ່ງລຸ່ມນີ້:

- ຄັ້ງທີ່1: ແມ່ນຈະຖືກຕັກເຕືອນ ແລະ ສັ່ງຢຸດການຖາງປ່າໜໍ່ຂົມຈາກກອງຫຼອນບ້ານ
- ຄັ້ງທີ່ 2: ແມ່ນຈະຖືກໜ່ວຍໄກ່ເກ່ຍສຶກສາອົບຮົມ ຈາກຄະນະຮັບຜິດຊອບການຈັດຕັ້ງບ້ານ
- ຄັ້ງທີ່3: ແມ່ນຈະຖືກປັບໃໝ 4 ລ້ານກີບຕໍ່ຄັ້ງ/ຄອບຄົວ ຈາກການຈັດຕັ້ງບ້ານສຳລັບກົດລະບຽບການຄຸ້ມຄອງທີ່ນຳໃຊ້ ແມ່ນອີງຕາມການເຫັນດີຕົກລົງເປັນເອກະພາບ ຂອງປະຊາຊົນພາຍໃນບ້ານແລ້ວຜ່ານຂັ້ນເມືອງຈຶ່ງເອົາອອກ ມານຳໃຊ້ໄດ້. ໃນກໍລະນີອຳນາດການປົກຄອງຂັ້ນບ້ານ ໄກ່ເກ່ຍບໍ່ຕົກແມ່ນສົ່ງໃຫ້ຂັ້ນເມືອງພິຈາລະນາຕາມສະຖານໜັກຫຼືເບົາ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ໃນເມື່ອ ທ່ານເຍ່ຍລີມົວ ໄດ້ຖືກແຕ່ງຕັ້ງ ເປັນປະທານບ້ານແລ້ວ ທ່ານກໍ່ໄດ້ຮັບການມອບໝາຍວຽກງານຕ່າງໆ ຈາກການເຫັນດີ ຂອງອຳນາດການປົກຄອງເກົ່າ ແລະ ຊາວກະສິກອນ ໄດ້ວາງ ລະບຽບການ ແລະ ສິດຕ່າງໆເຂົ້າໃນການຄຸ້ມຄອງປ່າໜໍ່ຂົມ.

➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ.ເຍ່ຍລີມົວ, ບ.ປາງທອງ, ເມ.ນາໝໍ້



ຊາວກະສິກອນດີເດັ່ນ



ສຳພາດກ່ຽວກັບການຄຸ້ມຄອງປ່າໜໍ່ຂົມ

# ວິທີການທີ່ພົ້ນເດັ່ນ :

## ການກຳຈັດຫຍ້າຊ້ອນທີ່ເກີດໃນນາເຂົ້າ (ການປູກເຂົ້າ)

### ➢ ປະຫວັດຫຍໍ້ຂອງຊາວກະສິກອນ:

ຊື່:ທ້າວ. ມູລີ ອາຍຸ:40ປີ, ຊົນເຜົ່າ:ມົ້ງ ອາຊີບ: ຊາວນາ ເກີດຢູ່ບ້ານ ນາແສ, ເມືອງ ນາໝໍ້, ແຂວງອຸດົມໄຊ. ໃນປີ 1998 ລາວໄດ້ຍ້າຍມາຢູ່ບ້ານຫ້ວຍຊາງ,ເມືອງ ນາໝໍ້, ແຂວງອຸດົມໄຊ. ອາຊີບລາວແມ່ນຊາວກະສິກອນ, ລາວມີ ລູກ 7ຄົນ, 3 ຄົນ ຮຽນຢູ່ຊັ້ນປະຖົມ ແລະ ເມຍຂອງລາວ ແມ່ນຊາວກະສິກອນ ເຊິ່ງລາວມີເນື້ອ ທີ່ນາ 0.8 ເຮັກຕາໄດ້ຮັບ ຜົນຜະລິດ2ໂຕ່ນຕໍ່ປີ. ນອກນັ້ນ ລາວຍັງໄດ້ປູກເຂົ້າໄຮ່ອີກໄດ້ ຮັບ ຜົນຜະລິດ 2ໂຕນ ຕໍ່ປີ ສະເລ່ຍແລ້ວໃນ ປີໜຶ່ງ ລາວຂາຍເຂົ້າ 2 ໂຕນໄດ້ ປະມານ 4 ລ້ານກີບ ຕໍ່ປີ.

### ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຍັງ?

ໃນສະພາບຜ່ານມາຊາວກະສິກອນ ບ້ານຫ້ວຍຊາງຍັງບໍ່ຮູ້ນຳໃຊ້ຢາ ສະຕ້າ ປາ-ດີມາ ກຳຈັດຫຍ້າທີ່ເກີດຢູ່ໃນນາເຂົ້າ ຈຳຕ້ອງໄດ້ໃຊ້ແຮງງານຫຼາຍກັບການຫຼົກຫຍ້າອອກ, ບໍ່ມີເວລາເຮັດກິດຈະກຳອື່ນ ແລະ ຜົນຜະລິດໃນແຕ່ລະປີບໍ່ໄດ້ເທົ່າທີ່ຄວນ. ນັບແຕ່ປີ 2006 ມາຮອດປະຈຸບັນລາວໄດ້ນຳໃຊ້ ຢາສະ ຕ້າປາ - ດີ ຊະນິດນີ້ມາ ກຳຈັດຫຍ້າທີ່ເກີດໃນນາເຂົ້າ ໂດຍບໍ່ໄດ້ໃຊ້ແຮງ ງານຫຼົກອອກ ແລະ ການນຳໃຊ້ຢາສະປາຕ້າ-ດີ ຊະນິດນີ້ ບໍ່ມີ ຜົນກະທົບຕໍ່ ຕົ້ນເຂົ້າ, ແມງໄມ້, ສັດນ້ຳ ແລະ ຍັງໃຫ້ ຜົນຜະລິດສູງ. ສະເລ່ຍ 4 ໂຕນຕໍ່ເຮັກຕາ

### ➢ ການປະຕິບັດວິທີດັ່ງກ່າວ?

ການຮຽນຮູ້ຂອງລາວ ໂດຍບໍ່ໄດ້ຜ່ານການຝຶກອົບ ແຕ່ລາວສາມາດຮຽນຮູ້ມາ ຈາກພີ່ນ້ອງບ້ານອື່ນມານຳໃຊ້ ເຊິ່ງລາວສາມາດປະຕິບັດຕາມຂັ້ນຕອນດັ່ງນີ້:

1. ກະກຽມຢາ ສະຕ້າປາ-ດີ ທີ່ຕ້ອງກຳຈັດຫຍ້າທີ່ເກີດໃນນາເຂົ້າ ແລະ ແພອັດປາກໄວ້ກ່ອນ,
2. ໃນເມື່ອປັບດຳເຂົ້ານາໄດ້15-20ມື້ຕ້ອງໄດ້ຂັງນ້ຳໄວ້ ບໍ່ໃຫ້ນ້ຳ ໄຫຼອອກ. ຖ້າຫາກບໍ່ຂັງນ້ຳໄວ້ໃນເວລາວ່ານຢາກຳຈັດຫຍ້າໄຫຼອອກຈາກໃນນາເຂົ້າ ເຮັດໃຫ້ຫຍ້າບໍ່ຕາຍ,
3. ຕ້ອງຂັງນ້ຳປະໄວ້ປະມານ 15-20 ຊມບໍ່ໃຫ້ນ້ຳແຫ້ງລົງເກີນໄປ,
4. ຕ້ອງເອົາແພອັດປາກໃຫ້ດີ ກ່ອນຈະວ່ານຢາກຳຈັດຫຍ້າລົງໄປໃນນາເຂົ້າ,
5. ການວ່ານ, ວ່ານແບບ ວ່ານປຸ໋ຍທົ່ວໄປ ແຕ່ຕ້ອງໃຫ້ທົ່ວເຖິງກັນ. ຫຼັງຈາກວ່ານໄດ້ 1 ອາທິດຈະເຫັນຫຍ້າຫ່ຽວຕາຍເປັນສີດຳແລ້ວສາມາດປ່ອຍນ້ຳເຂົ້າໄດ້. ຖ້າຫາກບ່ອນທີ່ແຫ້ງໄວ ຫຼັງຈາກວ່ານຢາກຳຈັດຫຍ້າລົງໄປ3-4ມື້ສາມາດປ່ອຍນ້ຳເຂົ້າໄດ້
6. ອັດຕາການໃຊ້ 1ເຮັກຕາຕໍ່ 30ກິໂລ (ໃນເປົາ 1 ມີ 1 5ກິໂລ)..

### ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ທ້າວ ມູລີ ໄດ້ເດີນທາງໄປຢາມພີ່ນ້ອງ ຢູ່ບ້ານຫາດຍາວ, ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ. ພີ່ນ້ອງຂອງລາວ ໄດ້ເຫຼົ່າກ່ຽວກັບ ການກຳຈັດຫຍ້າຊ້ອນ ທີ່ເກີດຢູ່ໃນນາເຂົ້າ ຊຶ່ງພີ່ນ້ອງຂອງລາວ ໄດ້ນຳໃຊ້ຢາ ສະປາຕ້າ-ດີ ຂອງໄທທີ່ເປັນຖົງ. ລັກສະນະເປັນເມັດສີແດງ ໜ້ອຍ. ຫຼັງຈາກລາວໄດ້ ຄຳແນະນຳ ຈາກພີ່ນ້ອງຂອງລາວ, ລາວໄດ້ຊື້ມາທົດລອງໃຊ້ໃນນາເຂົ້າຂອງລາວສາມາດ ເຮັດໃຫ້ລາວຍອມຮັບໄດ້. ນັບແຕ່ ປີ 2006 ລາວໄດ້ນຳໃຊ້ມາຮອດປັດຈຸບັນ.

➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ທ.ມູລີ, ບ.ຫ້ວຍຊາງ, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ການດັບສູນຫຍ້າໃນນາເຂົ້າ



ຊະນິດຫຍ້າທີ່ກຳຈັດໃນນາເຂົ້າ



ການນຳໃຊ້ຢາສະປາຕ້າ-ດີ

# ວິທີການທີ່ພົ້ນເດັ່ນ :

## ການປ້ອງກັນການລັກໜໍ່ຂົມ (ການຄຸ້ມຄອງປ່າໜໍ່ຂົມ)

- **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ່ານເອັກ ອາຍຸ 46 ປີ ເປັນຊາວກະສິກອນບ້ານນ້ຳແພງ ເມືອງນາໝໍ້ ແຂວງອຸດົມໄຊ ຄອບຄົວຂອງລາວມີທັງໝົດ 6 ຄົນ,ຍິງ 3 ຄົນ ອາຊີບແມ່ນເຮັດນາປູກເຂົ້າ ເມື່ອກ່ອນຢູ່ບ້ານກອນຕື້ນ ເມືອງປາກທາ ແຂວງບໍ່ແກ້ວ ໄດ້ຍົກຍ້າຍມາຢູ່ໃນປີ 1993 ເບື້ອງຕົ້ນລາວໄດ້ຊື້ດິນ ເນື້ອທີ່ 1.5 ເຮັກຕາ ໃນປະຈຸບັນໄດ້ບຸກເບີກເປັນເນື້ອທີ່ນາແລ້ວ ນອກຈາກນັ້ນລາວຍັງຖືກແຕ່ງຕັ້ງ ຈາກອຳນາດການປົກຄອງບ້ານໃຫ້ເປັນຫົວໜ້າກອງຫຼອນບ້ານ ແລະ ໄດ້ເປັນນາຍ ບ້ານໜຶ່ງສະໄໝ(2000-2002).

- **ວິທີການດັ່ງກ່າວຊ່ວຍແກ້ໄຂຍັງ?**

ໃນສະພາບປະຈຸບັນ ບ້ານນ້ຳແພງ ເມືອງນາໝໍ້ ແຂວງອຸດົມໄຊ ເປັນບ້ານໜຶ່ງທີ່ມີທ່າແຮງທາງດ້ານເຄື່ອງປ່າຂອງດົງ ໂດຍສະເພາະໜໍ່ໄມ້ຂົມ ເຊິ່ງສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ກຸ່ມຄຸ້ມຄອງຂອງບ້ານໄດ້ຫຼາຍພໍສົມຄວນຄື: 15 ລ້ານ ຫາ 20 ລ້ານກີບ/ປີ ເຊິ່ງຜ່ານມາມີບັນຫາໃນການລັກຂຸດໜໍ່ຂົມໂດຍບໍ່ໄດ້ຮັບອານຸຍາດຈາກບ້ານ.

- **ການປະຕິບັດວິທີດັ່ງກ່າວ?**

ພາຍຫຼັງທີ່ໄດ້ມີການຈັດສັນທີ່ດິນ ແລະ ມອບດິນ-ມອບປ່າໃນປີ1997ບ້ານນ້ຳແພງໄດ້ມີການຈັດຕັ້ງກຸ່ມຄຸ້ມຄອງປ່າໜໍ່ຂົມຂື້ນ ໂດຍສ້າງລະບຽບການຄຸ້ມຄອງປ່າ, ການສ້າງລາຍຮັບເຂົ້າກຸ່ມ ເພື່ອເປັນເງິນກອງທຶນ,ເງິນບໍລິຫານ ຂອງບ້ານ. ການເກັບເງິນເຂົ້າກຸ່ມແມ່ນປະຕິບັດຄື: ຫົວໜ້າກຸ່ມເປັນຜູ້ພົວພັນກັບພໍ່ຄ້າເພື່ອມາເກັບຊື້ປະເພດໜໍ່ຂົມ ແລະ ວາງລາຄາກັບພໍ່ຄ້າລະອຽດ ຈາກນັ້ນກຸ່ມໄດ້ລະດົມຊາວກະສິກອນພາຍໃນບ້ານ ເພື່ອໄປຫາໜໍ່ຂົມແລ້ວ ນຳມາຂາຍໃຫ້ກຸ່ມໂດຍລາຄາ2,000-4,500 ກີບ/ກິໂລ, ໃນນີ້ໄດ້ຫັກໃຫ້ກຸ່ມ 200-300 ກີບ/ກິໂລ. ກໍລະນີມີການລັກລອບຈະເປັນຄົນພາຍໃນບ້ານ, ບ້ານໃກ້ຄຽງ ຖ້າກຸ່ມຄຸ້ມຄອງພົບເຫັນຈະຖືກປັບໃໝຄູນສອງຂອງມູນຄ່າ ພ້ອມທັງຍຶດອຸປະກອນ ແລະ ຂອງກາງທັງໝົດ.

- **ວິທີການດັ່ງກ່າວໄດ້ມາຈາກໃສ?**

ທ້າວເອັກໄດ້ສົມທົບກັບອຳນາດການປົກຄອງບ້ານເພື່ອສ້າງລະບຽບການຄຸ້ມຄອງ ແລະ ຂຸດ ຄົ້ນໜໍ່ຂົມ, ບວກກັບຄວາມຮູ້ຄວາມສາມາດຂອງລາວ ທີ່ເຄີຍໄດ້ປະຕິບັດຜ່ານມາ.

- **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ທ. ເອັກ, ບ.ນ້ຳແພງ, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ການກວດກາປ່າໜໍ່ຂົມ



ການຄຸ້ມຄອງປ່າໜໍ່ຂົມ

# ຫົວຂໍ້ທີ່ດີເດັ່ນ: ການລ້ຽງໄກ່ລາດ   ວິທີການທີ່ພົ້ນເດັ່ນ : ການປຸງແຕ່ງອາຫານສຳລັບການລ້ຽງໄກ່

## ➢ ປະຫວັດຫຍໍ້ຂອງຊາວກະສິກອນ:

ຊື່: ນາງ.ສອນ   ອາຍຸ:42ປີ

ຊົນເຜົ່າ:ລາວລຸ່ມ   ອາຊີບ: ເຮັດນາ

ຍ້າຍມາແຕ່: ຂ.ຜົ້ງສາລີ, ໃນປີ1995

ບ້ານຢູ່ປະຈຸບັນ: ບ.ນາຖົ່ວ, ມ.ນາໝໍ້ ຂ.ອຸດົມໄຊ.

ເຊິ່ງພາຍໃນຄອບຄົວແຮງງານຕົ້ນຕໍ່4 ຄົນ,ສຳຮອງ4ຄົນ ເມື່ອກ່ອນກໍ່ແມ່ນລ້ຽງແບບທຳມະຊາດ ພາຍຫຼັງທີ່ໄດ້ນຳໃຊ້ເຕັກນິກການລ້ຽງ ຈຳນວນໄກ່ກໍ່ມີເຖິງ 230ໂຕ ໃນແຕ່ລະປີຂາຍໄກ່:30-50ໂຕ ມີລາຍຮັບສະເລ່ຍບໍ່ຫຼຸດ:2 ລ້ານກີບ/ປີ.

ປະຈຸບັນແມ່ນຮັກສາໄກ່ໄວ້ໃນຮອບວຽນຂອງການລ້ຽງຄື: 50ໂຕ, ນອກຈາກການລ້ຽງໄກ່ແລ້ວ ຍັງໄດ້ລ້ຽງສັດໃຫຍ່ (ຄວາຍ:3ໂຕ ແລະ ງົວ23ໂຕ),ສວນສາລີ (2ຮຕ), ເຮັດນາ (2ຮຕ)

## ➢ ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?

ຜ່ານມາແມ່ນມີບັນຫາໃນການລ້ຽງໄກ່ ໂດຍສະເພາະແມ່ນໄກ່ບໍ່ໃຫຍ່ແລະຂາຍບໍ່ໄດ້ລາຄາດີ ນັ້ນກໍ່ຍ້ອນວ່າບໍ່ໄດ້ໃຫ້ອາຫານທີ່ພຽງພໍ ຕາມຄວາມຕ້ອງການຂອງໄກ່ ສະນັ້ນ,ຈຶ່ງພາໃຫ້ໄກ່ຈ່ອຍຕໍ່ມາລາວຈຶ່ງໄດ້ປັບປຸງ ວິທີການປຸງແຕ່ງອາຫານສຳລັບການລ້ຽງໄກ່.

## ➢ ການປະຕິບັດວິທີດັ່ງກ່າວ?

1.ການປະສົມອາຫານສຳລັບລ້ຽງໄກ່:

ນຳໃຊ້ເຂົ້າປຸ້ນ,ສາລີບົດ ແລະຫົວອາຫານສຳເລັດຮູບໃນການເກືອໄກ່.

**ສູດທີ່:1** ສຳລັບໄກ່ນ້ອຍ(ເຊົ້າ,ແລງ)

- ຫົວອາຫານ: 1/2 ຈອກ (ຫຼືເຄິ່ງຈອກ)
- ເຂົ້າປຸ້ນ: 1 ຈອກ
- ສາລີບົດ: 1 ຈອກ

ອັດຕາແມ່ນໃຫ້ໄກ່ກິນຕາມຕ້ອງການ

**ສູດທີ່:2** ສຳລັບໄກ່ໃຫຍ່ 100ໂຕ

- ຮຳ: 5-6 ກິໂລ
- ເຂົ້າປຸ້ນ: 2-3 ກິໂລ
- ເມັດສາລີ: 2-3 ກິໂລ _ ຖ້າບໍ່ມີ (ອາດໃຊ້ຜັກນ້ຳ,ຜັກສະລັດຊອຍປົນ)
- ໝາກຮຸ່ງສຸກ_ບໍ່ຈຳກັດປະລິມານ (ໃຫ້ກິນສະເພາະ ເປັນອາຫານເສີມ)

**ສູດທີ່:3** ການນຳໃຊ້ຢາພື້ນເມືອງ

- ເຄືອເຂົາຮໍ: 2-3 ຂີດ
- ຂິມກະເດົາ: 2-3 ຍອດ

ຕຳໃຫ້ແຫຼກ ແລ້ວປະສົມກັບອາຫານໃຫ້ໄກ່ກິນເດືອນລະເທື່ອ, ສາມາດປ້ອງກັນການເກີດພະຍາດໄດ້ດີ ຄວາມຮູ້ດັ່ງກ່າວແມ່ນສືບທອດ ແລະ ນຳໃຊ້ກັນມາແຕ່ພໍ່ ແຕ່ແມ່.

## ➢ ວິທີການດັ່ງກ່າວໄດ້ມາຈາກໃສ?

ວິທີການປຸງແຕ່ງອາຫານຂອງນາງສອນແມ່ນລາວໄດ້ມີການທົດສອບປະຕິບັດການປຸງແຕ່ງອາຫານໄກ່ ຢູ່ພາຍໃນຄອບຄົວຂອງລາວ ເຊິ່ງເບື້ອງຕົນແມ່ນລອງຖືກ ລອງຜິດຢູ່ຫຼາຍປີ ພ້ອມທັງໄດ້ມີການແລກປ່ຽນບົດຮຽນນຳພີ່ນ້ອງທີ່ຢູ່ບ້ານອື່ນໆ.

ພາຍຫຼັງທົດສອບກໍ່ເຫັນວ່າໄກ່ຕຸ້ຍຂຶ້ນຈຳນວນໄກ່ກໍ່ແຜ່ຫຼາຍຂຶ້ນສ່ວນອາຫານທີ່ນຳມາປຸງແຕ່ງກໍ່ມີຢູ່ໃນທ້ອງຖິ່ນຢ່າງຫຼວງຫຼາຍ ແລະ ລາວກໍ່ຍັງສືບຕໍ່ນຳໃຊ້ວິທີການດັ່ງກ່າວນີ້ຈົນມາຮອດປະຈຸບັນ

## ➢ ຕິດຕໍ່ຂໍ້ມູນເພີ່ມເຕີມ:

ນ.ສອນ

ບ.ນາຖົ່ວ, ມ. ນາໝໍ້, ຂ.ອຸດົມໄຊ



ນາງ. ສອນ (ຊາວກະສິກອນດີເດັ່ນ)



ສູດອາຫານປະສົມສຳລັບໄກ່ໃຫຍ່



ການໃຫ້ອາຫານສຳລັບໄກ່

# ວິທີການທີ່ພົ້ນເດັ່ນ :

## ການອະນຸບານໄກ່ນ້ອຍ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ.ແສງຈ່ອຍ, ອາຍຸ: 35ປີ, ຊົນເຜົ່າ: ລາວລຸ່ມ, ບ້ານເກີດ: ບ.ນາທີ່ງ ມ.ນາໝໍ້,ຂ.ອຸດົມໄຊ (ບ້ານຢູ່ປະຈຸບັນ) ອາຊີບ: ເຮັດນາ ແຮງງານ: ຕົ້ນຕໍ 2ຄົນ ແລະ ສຳຮອງ 2ຄົນ

ໃນຄອບຄົວລາວເອງແມ່ນໄດ້ທຳການຜະລິດຫຼາຍກິດຈະກຳເຊັ່ນ: ເຮັດນາ 2ບ່ອນ (1,7ຮຕ,ຜົນຜະລິດ:6ຕ) ແລະ ປູກພືດຜັກເປັນອາຊີບຕົ້ນຕໍ, ສ່ວນລາຍຮັບຂອງຄອບຄົວແມ່ນໄດ້ຈາກການຂາຍເຂົ້າ, ຈາກການຂາຍພືດຜັກໃນແຕ່ລະປີ ນອກຈາກນັ້ນຍັງມີໜອງປາ ແລະສວນຢາງພາລາ, ສ່ວນການລ້ຽງໄກ່ນັ້ນແມ່ນລ້ຽງຫຼາຍປະມານ:40 ກ່ວາໂຕ(ໄກ່ແມ່16ໂຕ) ແຕ່ບໍ່ໄດ້ຂາຍຫຼາຍເນື່ອງຈາກວ່າຮັບໃຊ້ຄອບຄົວ (ບໍ່ຢາກໄປຊື້ໄກ່ມາກິນເພາະວ່າມັກໄດ້ຍິນວ່າໄກ່ຢູ່ຕະຫຼາດມັກມີພະຍາດ) ຂາຍປີໜຶ່ງພຽງ:20-30ໂຕ ລາຍຮັບຈາກການຂາຍໄກ່ປີໜຶ່ງໄດ້ຢູ່: 7-800.000ກີບ/ປີ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ໃນເມື່ອກ່ອນກໍແມ່ນລ້ຽງໄກ່ຈຳນວນຫຼາຍ ແຕ່ໄກ່ນ້ອຍທີ່ຟັກແຕກແລ້ວນັ້ນແມ່ນຕາຍເກືອບໝົດ, ຄືມີໄກ່ນ້ອຍ 100ກ່ວາໂຕ ຍັງເຫຼືອພຽງແຕ່ 20ໂຕ ໃນແຕ່ລະປີ, ໂດຍສະເພາະແມ່ນຕົ້ນລະດູຝົນ ທີ່ມີອາກາດໜາວ ແລະ ມີພະຍາດລະບາດ, ແຕ່ມາຮອດປະຈຸບັນແມ່ນໄກ່ຟັກແຕກເທົ່າໃດກໍ່ແມ່ນຍັງເທົ່ານັ້ນ (ບໍ່ຕາຍ).

➢ **ການປະຕິບັດວິທີດັ່ງກ່າວ?**

ພາຍຫຼັງໄກ່ນ້ອຍໄດ້ 5 ວັນແມ່ນແຍກອອກຈາກແມ່(ຖ້າກາຍ10ມື້ໄກ່ຈະບໍ່ກິນຫົວອາຫານ) ຖ້າບໍ່ເອົາໄກ່ນ້ອຍນັ້ນອອກໄກ່ແມ່ນານໄຂ່, ຖ້າເອົາໄກ່ນ້ອຍອອກປະມານ:15 ວັນໄກ່ແມ່ກໍ່ໄຂອີກຊຸດໃໝ່ ຫຼັງຈາກນັ້ນນຳມາລ້ຽງໃສ່ແກບ ແລະເອົາຫົວອາຫານຈີນເກືອໄກ່ ເຊິ່ງມີຢູ່: 2 ຊະນິດຄື: ສີເຫຼືອງ ແລະ ສີດຳເອົາມາປົນກັບຮຳ, ສາລີ, ເຂົ້າປຽນ (ແຕ່ວ່າຫົວອາ ຫານສີດຳແມ່ນຈະດີກ່ວາໄກ່ກິນດີ) ຈົນໄກ່ອາຍຸໄດ້ 2ເດືອນຈິ່ງປ່ຽນເປັນຫົວອາຫານປະສົມກັບເຂົ້າປຽນ ແລ້ວຄ່ອຍໆຫຼຸດຜ່ອນຫົວອາຫານ ພ້ອມທັງໝັ່ນຕິດຕາມກວດກາໄກ່ນ້ອຍຕະຫຼອດ, ຖ້າຫາກພົບເຫັນໄກ່ ໃນເຂດບ້ານນີ້ວ່າເຫງົາ, ກິນອາຫານບໍ່ເກັ່ງແມ່ນເອົາຢາປາລາ, ອຳປີ, ເຕຕາ ແນວລະ3ເມັດ) ປະສົມນ້ຳໃຫ້ກິນທັນທີໂລດເພື່ອປ້ອງກັນພະຍາດຕິດ (ຖ້າໄກ່ເຈັບທ້ອງບໍ່ກິນເຂົ້າແມ່ນປ່ອນຢາອຳປີ 1ເມັດ/ໂຕ) ແລະ ບໍ່ປ່ອຍໄກ່ນ້ອຍອອກ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ເບື້ອງຕົ້ນແມ່ນໄດ້ຈາກການໄປຢ້ຽມຢາມນ້ອງສາວຢູ່ຈີນ ແລະ ແລກປ່ຽນນຳເຂົາເຈົ້າແລ້ວກັບມາລອງເຮັດກໍເຫັນວ່າໄກ່ນ້ອຍບໍ່ຕາຍແຂງແຮງດີ.

(ປະຈຸບັນກຳລັງຄິດຈະເຮັດຄອກອະນຸບານໄກ່ນ້ອຍ ໂດຍໃຊ້ດອກໄຟຟ້າ)

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ທ.ແສງຈອຍ

ບ.ນາທີ່ງ, ມ.ນາໝໍ້, ຂ.ອຸດົມໄຊ



ຊາວກະສິກອນດີເດັ່ນ



ການເອົາຢາປະສົມນ້ຳໃຫ້ໄກ່ນ້ອຍ



ຢາອຳປີ, ປາລາ ແລະ ເຕຕາ



ໄກ່ນ້ອຍຫຼັງຈາກອະນຸບານແລ້ວ

# ວິທີການທີ່ພົ້ນເດັ່ນ :

## ການອະນາໄມຄອກໝູທີ່ຖືກຕ້ອງຕາມເຕັກນິກ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງແສງ, ອາຍຸ 45 ປີເປັນຊາວກະສິກອນຢູ່ບ້ານຂວາງ, ເມືອງນາໝໍ້, ແຂວງອຸດົມໄຊ. ລາວເກີດ ແລະ ເຕີບໃຫຍ່ຢູ່ທີ່ນີ້ ຄອບຄົວຂອງລາວມີ 8 ຄົນ, ແຮງງານຕົ້ນຕໍ 2 ຄົນ. ໃນປະຈຸບັນລາວຍັງເປັນຄະນະບ້ານ. ເມື່ອກ່ອນຄອບຄົວຂອງລາວມີອາຊີບໃນການເຮັດນາແຕ່ຜົນຜະລິດຍັງບໍ່ພຽງພໍກັບຄວາມຕ້ອງການບໍລິໂພກພາຍໃນຄອບຄົວ. ນອກຈາກການເຮັດນາແລ້ວລາວຍັງໄດ້ລ້ຽງສັດເປັນອາຊີບສຳຮອງ. ແຕ່ກ່ອນການລ້ຽງສັດຂອງລາວໂດຍສະເພາະແມ່ນໝູ ສ່ວນໃຫ່ຍແມ່ນລ້ຽງແບບທຳມະຊາດ. ລ້ຽງພໍຮັບໃຊ້ໃນຄອບຄົວ. ການລ້ຽງແມ່ນໃຫຍ່ຊ້າ, ສິ້ນເປືອງອາຫານ ແລະ ແຮງງານ, ເຮັດໃຫ້ການລ້ຽງໝູບໍ່ໄດ້ຮັບຜົນດີເທົ່າທີ່ຄວນ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ແຕ່ກ່ອນຄອກໝູຂອງລາວແມ່ນເຮັດຂູພື້ນຫຍຸ້ງຍາກໃນການອານາໄມຄອກເຮັດໃຫ້ຄອກເປື້ອນ ສົ່ງກິ່ນເໝັນ, ໝູເກີດພະຍາໄດ້ງ່າຍ. ຫຼັງຈາກທີ່ລາວໄດ້ຍົກພື້ນຄອກຂຶ້ນເຮັດໃຫ້ສະດວກໃນການອານາໄມຄອກໝູ, ຫຼຸດຜ່ອນກິ່ນເໝັນ , ບໍ່ຕິດເຊື້ອພະຍາດໄດ້ງ່າຍ, ກິນອາຫານໄດ້ດີ, ສຸຂະພາບແຂງແຮງ ແລະ ໃຫ່ຍໄວເຊິ່ງການລ້ຽງໝູຂອງລາວ1 ຊຸດມີໝູ15ໂຕ.ໃຊ້ເວລາໃນການລ້ຽງພຽງແຕ່ 5 ເດືອນ. ໝູຂອງ ລາວກໍ່ມີນ້ຳໜັກ 122 ກິໂລຕໍ່ໂຕ, ເຊິ່ງໄດ້ກຳໄລຈາກການຂາຍໝູ 1 ຊຸດ 7 ລ້ານກີບ.

➢ **ການປະຕິບັດວິທີດັ່ງກ່າວ?**

↳**ລາວມີວິທີການອະນາໄມຄອກໝູດັ່ງນີ້:**

1. **ເອົາຊວ້ານຕັກຂີ້ໝູອອກ ແລະ ເອົາຄຸ ຕັກນ້ຳລ້າງ.**
2. **ເອົາສາຍໂຕໂຍສີດນ້ຳລ້າງບໍລິເວນຄອກອີກເທື່ອໜຶ່ງຈົນສະອາດດີ.**
3. **ຫຼັງຈາກນັ້ນເອົານ້ຳດັ່ງປົນກັບປູນຂາວລ້າງພື້ນຄອກອີກເທື່ອໜຶ່ງເພື່ອຂ້າເຊື້ອ 1 ອາທິດຕໍ່ຄັ້ງ. (ສ່ວນປະສົມ: ຂີ້ເຖົ່າ 1 ກະບຸງໃສ່ນ້ຳ 2 ຄຸກັ່ນຕອງເອົານ້ຳແລ້ວເອົາປູນຂາວ 3 ກຳ ຄົນໃສ່ໃຫ້ລະລາຍ).**

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງ ແສງ ໄດ້ຮັບຄຳແນະນຳຈາກພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ນາໝໍ້ໃນປີ 2006 ແລະ ໄດ້ໄປແລກປ່ຽນບົດຮຽນຈາກພີ່ນ້ອງຢູ່ປະເທດຈີນໃນປີ 2007. ຫຼັງຈາກທີ່ລາວໄດ້ຮັບບົດຮຽນມາແລ້ວລາວໄດ້ນຳເອົາຄວາມຮູ້ດັ່ງກ່າວມາທົດລອງນຳໃຊ້, ຮູ້ສຶກວ່າດີຫຼາຍ ດັ່ງນັ້ນການລ້ຽງໝູຂອງລາວຈຶ່ງໄດ້ເອົາໃຈໃສ່ຂັ້ນຕອນໃນການອະນາໄມຄອກໝູໃຫ້ຫຼາຍຂຶ້ນນັບແຕ່ປີ 2008 ຈົນເຖິງປະຈຸບັນ.

➢ **ຂໍ້ມູນເພີ່ມເຕີມຕິດຕໍ່:**
0206249317 ຫຼື 0204605281
ນ. ແສງ ບ້ານ ຂວາງ,
ເມືອງ ນາໝໍ້ ແຂວງ ອຸດົມໄຊ



ຊາວກະສິກອນດີເດັ່ນ



ການອານາໄມຄອກໝູທີ່ດີ



ໝູຂອງຊາວກະສິກອນ

# ວິທີການທີ່ພົ້ນເດັ່ນ :

## ການລ້ຽງເປັດໃນນາເຂົ້າ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ນາງ ແປງ ອາຍຸ 39 ປີ ຊົນເຜົ່າລື້ ເປັນຊາວກະສິກອນຢູ່ບ້ານນ້ຳກໍ້,ເມືອງນາໝໍ້ ແຂວງ ອຸດົມໄຊ. ຄອບຄົວຂອງລາວມີສະມາຊິກທັງໝົດ 5 ຄົນ, ແຮງງານຕົ້ນຕໍ 2 ຄົນ. ລາວມີເນື້ອທີ່ນາທັງໝົດ 0,89 ເຮັກຕາ ເຊິ່ງເປັນມູນສືບທອດມາຈາກປູ່ຍ່າ ຕາຍາຍ. ໃນເມື່ອກ່ອນຄອບຄົວຂອງລາວມີອາຊີບໃນການເຮັດນາເປັນຫຼັກ. ແຕ່ຜົນຜະລິດຍັງຕ່ຳ ຍ້ອນໄດ້ຮັບຄວາມເສຍຫາຍຈາກສັດຕູພືດທຳລາຍຕົ້ນເຂົ້າ. ສະນັ້ນຈຶ່ງໄດ້ຫັນປ່ຽນມາລ້ຽງເປັດໃສ່ໃນນາເຂົ້າເພື່ອລາຍສັດຕູພືດ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ການເຮັດນາຂອງຊາວກະສິກອນໃນປະຈຸບັນໄດ້ນຳໃຊ້ຢາປາບສັດຕູພືດນັບມື້ນັບຫຼາຍຂຶ້ນເລື້ອຍໆອັນເຮັດໃຫ້ເປັນການສິ້ນເປືອງງົບປະມານການໃຊ້ຈ່າຍ ແລະທັງເປັນອັນຕະລາຍຕໍ່ສຸຂະພາບ. ດັ່ງນັ້ນ, ການລ້ຽງເປັດໃນນາເຂົ້າແມ່ນມີປະໂຫຍດຫຼາຍເປັນການທຳລາຍສັດຕູພືດທີ່ທຳລາຍເຂົ້າ. ເຮັດໃຫ້ຜົນຜະລິດ ເພີ່ມຂຶ້ນພ້ອມທັງເຮັດໃຫ້ສັດໄດ້ຮັບອາຫານຢ່າງພຽງພໍ. ນອກນັ້ນຍັງເປັນການເພີ່ມຝຸ່ນໃນນາເຂົ້າ. ສະນັ້ນ ຈຶ່ງໄດ້ນຳໃຊ້ວິທີການລ້ຽງເປັດໃນນາເຂົ້າຈົນເຖິງທຸກມື້ນີ້.

➢ **ການປະຕິບັດວິທີດັ່ງກ່າວ?**

ເມື່ອປັກດຳເຂົ້າໄດ້ປະມານ 1 ເດືອນແລ້ວຈຶ່ງປ່ອຍເປັດເຂົ້າທົ່ງນາ ໃນພື້ນທີ່ 0,89 ເຮັກຕາ /ເປັດຈຳນວນ 50 ໂຕ ຈົນເຖິງໄລຍະເຂົ້າຖອກຮວງແລ້ວນຳເອົາເປັດອອກຈາກພື້ນທີ່ນາ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ນາງແປງ ໄດ້ຮຽນຮູ້ວິທີການລ້ຽງເປັດໃສ່ນາເຂົ້ານຳສັດຕະວະແພດບ້ານນ້ຳກໍ້ ໃນປີ 2006 ຫຼັງຈາກນັ້ນລາວກໍ່ໄດ້ເຮັດການທົດລອງໂດຍນຳໃຊ້ວິທີການລອງຜິດລອງຖືກເຊິ່ງວິທີການລ້ຽງເປັດໃສ່ນາເຂົ້າເປັນວິທີໜຶ່ງທີ່ເຮັດໃຫ້ລາວຍອມຮັບແລະຮູ້ສຶກວ່າຜົນຜະລິດດີຂຶ້ນ ໂດຍການປຽບທຽບໃສ່ປີທີ່ຜ່ານມາທີ່ບໍ່ໄດ້ລ້ຽງເປັດໃສ່ນາເຂົ້າ. ພາຍຫຼັງທີ່ລາວລອງຜິດລອງຖືກແລ້ວເຮັດໃຫ້ລາວຮູ້ສຶກວ່າວິທີການດັ່ງກ່າວສາມາດເຮັດໃຫ້ຜົນຜະລິດຂອງລາວເພີ່ມຂຶ້ນເລື້ອຍໆໃນປີຕໍ່ໄປ. ດັ່ງນັ້ນ, ລາວຈຶ່ງໄດ້ນຳໃຊ້ວິທີການດັ່ງກ່າວຕັ້ງແຕ່ປີ 2007 ຈົນເຖິງປະຈຸບັນ.


➢ **ຂໍ້ມູນເພີ່ມເຕີມຕິດຕໍ່:**

020 6251914

ນາງ ແປງ , ບ.ນ້ຳກໍ້, ມ. ນາໝໍ້




ຊາວກະສິກອນດີເດັ່ນ



ການກະກຽມເປັດທີ່ຈະປ່ອຍລົງໃນນາເຂົ້າ



ຜົນຜະລິດເຂົ້ານາຂອງນາງແປງ

# ວິທີການທີ່ພົ້ນເດັ່ນ :

## ການບົວລະບັດນາເຂົ້າດ້ວຍວິທີຫຼົກຫຍ້າ ແລ້ວ ຢຽບລົງດິນນາເພື່ອເປັນຝຸ່ນ ເພີ່ມຜົນຜະລິດ

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ຊື່:ນາງ ເອື້ອຍ ອາຍຸ: 40 ປີ, ຊົນເຜົ່າ: ລື້ ອາຊີບ: ເຮັດນາ ເກີດຢູ່ບ້ານ: ນ້ຳກໍ້ ເມືອງ ນາໝໍ້ ແຂວງອຸ ດົມໄຊ ຈຳນວນສະມາຊິກຄອບຄົວທັງໝົດ 3 ຄົນ ແລະ ແຮງງານຕົ້ນຕໍ 3 ຄົນ. ໃນເມື່ອກ່ອນຄອບຄົວຂອງລາວເຮັດນາແບບທຳມະຊາດ ບໍ່ໄດ້ນຳໃຊ້ເຕັກນິກເຂົ້າຊ່ວຍ ໃນການຜະລິດເຫັນວ່າໃນເນື້ອທີ່ນາຂອງລາວທັງໝົດ 0.65ເຮັກຕາໄດ້ ເຂົ້າພຽງແຕ່ 3.6ໂຕນ ແຕ່ຜົນຜະລິດຍັງບໍ່ພຽງພໍກັບຄວາມຕ້ອງການ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

ຫຍ້າ ຫຼື ເສດພືດຕ່າງໆທີ່ມີຢູ່ໃນທຳມະຊາດຖ້າພວກເຮົາເບິ່ງໂດຍທົ່ວໄປແລ້ວຈະເຫັນວ່າ ຈະບໍ່ມີຄຸນປະໂຫຍດແຕ່ຢ່າງໃດ; ບາງຊະນິດກໍ່ຍາດແຍ່ງທາດອາຫານພືດທີ່ພວກເຮົາປູກເຊິ່ງໄດ້ສ້າງຄວາມລຳຄານແກ່ພວກເຮົາຫຼາຍສົມຄວນເຖິງຢ່າງໃດກໍ່ຕາມ ; ຖ້າພວກເຮົາເບິ່ງລົງເລິກທາງດ້ານວິທະຍາສາດ ແລະ ຮູ້ຈັກ ວິທີໝູນໃຊ້ຈະເຫັນວ່າ ຄຸນປະໂຫຍດຂອງພວກມັນມີຢ່າງຫຼວງຫຼາຍເຊັ່ນ: ຫຼຸດຜ່ອນການນຳໃຊ້ຝຸ່ນເຄມີ ແລະ ປະຢັດຕົ້ນທຶນການຜະລິດ ແຕ່ພາຍຫຼັງນຳໃຊ້ວິທີການດັ່ງກ່າວເວລາເກັບກູ້ຜົນຜະລິດ ເຫັນວ່າໃນເນື້ອທີ່ນາທັງໝົດ 0.65 ເຮັກຕາຜົນຜະລິດເຂົ້າໄດ້ເພີ່ມຂຶ້ນຈາກ 3,6 ກາຍເປັນ 4 ໂຕນ.

➢ **ການປະຕິບັດວິທີດັ່ງກ່າວ?**

ວິທີແລະຂັ້ນຕອນໃນການເຮັດ ແມ່ນເຮັດແບບງ່າຍດາຍໂດຍບໍ່ນຳໃຊ້ ຕົ້ນທຶນສູງ. ພຽງແຕ່ ໃຊ້ ແຮງງານ ບວກກັບຄວາມດຸໝັ່ນ ເຊັ່ນ: ພາຍຫຼັງການປັກດຳໄດ້ 1 ເດືອນລາວກໍ່ເລີ່ມບົວ ລະ ບັດໂດຍວິທີການຫຼົກຫຍ້າໃນພື້ນທີ່ນາຂອງຕົນ

1 ຫຼົກຫຍ້າໄດ້ໜຶ່ງກຳ ແລ້ວຢຽບລົງດິນນາ ແລະ ເອົາດິນຕົມຖົມອີກເທື່ອໜຶ່ງເພື່ອປ້ອງກັນບໍ່ໃຫ້ຫຍ້າດັ່ງກ່າວຟື້ນຄືນ.

2 ຕິດຕາມເບິ່ງການຈະເລີນເຕີບໂຕຂອງຕົ້ນເຂົ້າ ແລະເບິ່ງລະດັບນ້ຳໃຫ້ເໝາະສົມ..

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ໃນປີ 2000 ລາວໄດ້ມີແນວຄວາມຄິດທັນມາທົດລອງວິທີການຫຼົກຫຍ້າ ໃນພື້ນທີ່ນາຕົນເອງຢຽບລົງໃນພື້ນທີ່ນາ ;ໂດຍລາວຄິດວ່າເວລາຫຍ້າເນົ່າ ເພື່ອກາຍເປັນຝຸ່ນບຳລຸງແກ່ຕົ້ນເຂົ້າ , ເປັນການປັບປຸງດິນ ແລະ ເປັນການກຳຈັດຫຍ້າພາຍຫຼັງການທົດລອງໜຶ່ງລະດູການ ການທົດລອງດັ່ງກ່າວແມ່ນໄດ້ຮັບຜົນສຳເລັດ ແລະ ໄດ້ນຳໃຊ້ເຂົ້າໃນການຜະລິດຂອງລາວຈົນເຖິງປະຈຸບັນ.

**ຕິດຕໍ່ຂໍ້ມູນເພີ່ມເຕີມ:**

(020) 4119506

ນ. ເອື້ອຍ, ບ.ນ້ຳກໍ້, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ນາເຂົ້າທີ່ນຳໃຊ້ວິທີການຫລົກຫຍ້າ



ເນື້ອທີ່ເຮັດນາຂອງນາງເອື້ອຍ

# ວິທີການທີ່ພົ້ນເດັ່ນ :

## ການອະນຸບານໝູນ້ອຍ (ການລ້ຽງໝູ)

➢ **ປະຫວັດຫຍໍ້ຂອງຊາວກະສິກອນ:**

ທ້າວ.ຊຽງພູມີ ອາຍຸ:39ປີ, ຊົນເຜົ່າ:ກຶມມຸ ຍ້າຍມາແຕ່:ແຂວງ.ຜົ້ງສາລີ, ປີ1995 ບ້ານປະຈຸບັນ: ບ.ນາຖິ່ວ,ມ.ນາໝໍ້,ຂ.ອຸດົມໄຊ ອາຊີບ: ຄູສອນ.

ໃນເມື່ອກ່ອນການລ້ຽງໝູຂອງຄອບຄົວແມ່ນລ້ຽງປະປ່ອຍຕາມທຳມະຊາດ ມາຮອດປີ2004 ຈິ່ງໄດ້ເລີ້ມມີການນຳໃຊ້ເຕັກນິກເຂົ້າຊ່ວຍ ໃນນັ້ນຄອບຄົວລາວເອງມີແຮງງານຕົ້ນຕໍ 2 ຄົນ, ສຳຮອງ 2 ຄົນ ປະຈຸບັນມີໝູຢູ່19ໂຕ ໃນນັ້ນມີໝູພໍ່ພັນ 1ໂຕ -ແມ່ພັນ3ໂຕ ໃນແຕ່ລະປີຄອບຄົວລາວສາມາດຂາຍໝູໄດ້ 7-10ໂຕ ສ້າງລາຍຮັບໄດ້ຢູ່ 5 ລ້ານກີບ/ປີ ແລະ ຈະຂະຫຍາຍການລ້ຽງໝູໃຫ້ໄດ້ 25ໂຕ ໃນປີຕໍ່ໄປ.

➢ **ວິທີການດັ່ງກ່າວຊ່ວຍແກ້ໄຂຫຍັງ?**

**ໃນເບື້ອງຕົ້ນຂອງການລ້ຽງ ແມ່ນອັດຕາການຕາຍສູງ ຄືຜ່ານມາໝູນ້ອຍເກີດໃໝ່10ໂຕ ຈະລອດຕາຍພຽງ3-4ໂຕ ສາເຫດແມ່ນໝູແມ່ເຕັງ,ຢຽບ ແລະ ໝູນ້ອຍມີອາການເຈັບທ້ອງຕາຍ. ປະຈຸບັນໝູ1ຊອກ(ຈະມີໝູນ້ອຍປະມານ: 25ໂຕ/3ແມ່, ແມ່ນຈະມີອັດຕາລອດຕາຍຢູ່ 80% ຂື້ນໄປ.**

➢ **ການປະຕິບັດວິທີດັ່ງກ່າວ?**

1.ການແຍກຄອກໝູແມ່ ແລະ ຄອກອະນຸບານໝູນ້ອຍສະດວກໃນການໃຫ້ອາຫານ (ໃຫ້ອາຫານພຽງພໍກັບຄວາມຕ້ອງການຂອງໝູນ້ອຍ) ໝູນ້ອຍໃຫຍ່ໄວ, ງ່າຍໃນການສັກຢາປ້ອງກັນພະຍາດພ້ອມທັງຊ່ວຍບໍ່ໃຫ້ໝູແມ່ເຕັງ ແລະ ຢຽບຕາຍ.

2.ການໃຫ້ອາຫານໝູນ້ອຍ (ສ່ວນປະສົມ: ຮຳ 1ຖ້ວຍແກງ, ຫົວອາຫານ1ບ່ວງສາລີບົດ 1ຖ້ວຍແກງ,ປະສົມນ້ຳພໍໃຫ້ປັ້ນເປັນກ້ອນໄດ້) ຈົນອາຍຸ2-3ເດືອນຈິ່ງປ່ຽນສູດອາຫານໃໝ່.

3.ການປ້ອງກັນພະຍາດ ແລະ ປິ່ນປົວໝູນ້ອຍ: ການປະສົມຢາແອນໂລແຟນຕາໃນອັດຕາສ່ວນຢາ 2-3ບ່ວງແກງ ປະສົມກັບອາຫານ(ອັດຕາການໃຫ້ປົກກະຕິ) ໃຫ້ໝູໃນຊ່ວງອາຍຸ:2-3ເດືອນ,ເທື່ອ2ຄັ້ງ: ເຊົ້າ-ແລງ(ໃຫ້ກ່ອນຊ່ວງລະດູການທີ່ມັກເກີດການລະບາດຂອງພະຍາດ) **ໝາຍເຫດ: ໃຫ້ພຽງຄັ້ງດຽວ**

4.ການຕັດແຂ້ວ ແລະ ຕອນໝູນ້ອຍ: ພາຍຫຼັງໝູເກີດຕ້ອງໄດ້ມີການຕັດສາຍແຫ່, ຕັດແຂ້ວເພື່ອໃຫ້ສາມາດກິນນົມໄດ້ດີ(ແມ່ໝູບໍ່ເຈັບ)ໂດຍການໃຊ້ມີດຕັດເລັບ , ສ່ວນການຕອນນັ້ນ ແມ່ນຈະເຮັດພາຍຫຼັງໝູອາຍຸໄດ້1-2ເດືອນ.

ເຊິ່ງຂັ້ນຕອນແລະວິທີການທີ່ກ່າວມານັ້ນແມ່ນລາວໄດ້ປະຕິບັດເອງ ແລະເຫັນວ່າໝູກິນອາຫານດີ, ໃຫຍ່ໄວ ແລະບໍ່ເກີດພະຍາດ ພ້ອມທັງຂາຍໄດ້ລາຄາດີ.

➢ **ວິທີການດັ່ງກ່າວໄດ້ມາຈາກໃສ?**

ແມ່ນໄດ້ຈາກການໄປຢ້ຽມຢາມພີ່ນ້ອງ ຢູ່ບ້ານ.ນາທິ່ງ ເມືອງ.ນາໝໍ້ ຫຼັງຈາກ ນັ້ນກໍ່ໄດ້ມາທົດລອງປະຕິບັດຕົວຈິງກັບໝູຂອງຕົນເອງ, ນອກຈາກນັ້ນກໍ່ຍັງໄດ້ຈາກການເບິ່ງໂທລະພາບ.

➢ **ຕິດຕໍ່ຂໍ້ມູນເພີ່ມເຕີມ:**

ທ.ຊຽງພູມີ, ບ.ນາຖິ່ວ, ມ. ນາໝໍ້



ຊາວກະສິກອນດີເດັ່ນ



ໃຫ້ອາຫານໝູພໍ່ແມ່ພັນ, ໝູນ້ອຍ



ຈັບໝູອາຍຸ:1ເດືອນ, ເພື່ອສັກຢາ



ລ້ຽງໝູຂຶ້ນເພື່ອຂາຍ